ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 243 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30 ທັນວາ 2021

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 39/ສພຊ, ລົງວັນທີ 17 ພະຈິກ 2021 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 19/ຄປຈ, ລົງວັນທີ 16 ທັນວາ 2021.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ທອງລຸນ ສີສຸລິດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 39 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 / 11 / 21

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ
## (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 15 ພະຈິກ 2021 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 17 ພະຈິກ 2021.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 12 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ພະຈິກ 2021

# ກົດໝາຍ
# ວ່າດ້ວຍການປະຕິບັດຄຳຕັດສິນຂອງສານ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ໃນການປະຕິບັດຄຳຕັດສິນຄະດີແພ່ງ, ຄະດີອາຍາ ກ່ຽວກັບຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບຊັບ ຫຼື ໂທດຮິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ເພື່ອເຮັດໃຫ້ຄຳຕັດສິນຂອງສານໄດ້ຮັບການປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງ, ວ່ອງໄວ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ກົດໝາຍ, ປົກປ້ອງສິດ, ຜົນປະໂຫຍດຂອງລັດ, ສິດຜົນປະໂຫຍດອັນຊອບທຳ ຂອງບຸກຄົນ, ລວມໝູ່ ແລະ ການຈັດຕັ້ງ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ, ສ້າງລັດທີ່ປົກຄອງດ້ວຍກົດໝາຍຢ່າງແທ້ຈິງ.

**ມາດຕາ 2 (ປັບປຸງ) ການປະຕິບັດຄຳຕັດສິນຂອງສານ**

ການປະຕິບັດຄຳຕັດສິນຂອງສານ ແມ່ນ ການເຄື່ອນໄຫວຂອງອົງການປະຕິບັດຄຳຕັດສິນຂອງສານ ແລະ/ຫຼື ຄູ່ຄວາມໃນການນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ມາປະຕິບັດໃຫ້ຖືກຕ້ອງ ແລະ ປາກົດຜົນເປັນຈິງ ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່, ການຈັດຕັ້ງ ແລະ ບຸກຄົນ ທີ່ຖືກລະເມີດ ຫຼື ສູນເສຍໄປ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບົດບັນທຶກການໄກ່ເກ່ຍຂອງສານ** ໝາຍເຖິງ ເອກະສານຢັ້ງຢືນຜົນການໄກ່ເກ່ຍຂອງສານ;

2. **ຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ** ໝາຍເຖິງ ການຕົກລົງຂອງຄູ່ກໍລະນີໃນການໄກ່ເກ່ຍ, ການຕົກລົງຂອງຄູ່ກໍລະນີ ກ່ອນການຕັດສິນ, ຄໍາຕັດສິນຂອງກໍາມະການຕັດສິນ;

3. **ຄໍາຕັດສິນຂອງກໍາມະການຕັດສິນພາຍໃນ** ໝາຍເຖິງ ຄໍາຕັດສິນ ຂອງຜູ້ຕັດສິນ ຫຼື ກໍາມະການຕັດສິນ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ ຕາມກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. **ຜູ້ຖືກປະຕິບັດຄໍາຕັດສິນຂອງສານ** ໝາຍເຖິງ ຜູ້ມີພັນທະປະຕິບັດສິ່ງໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນຄໍາຕັດສິນຂອງສານ;

5. **ການຍຶດຊັບ** ໝາຍເຖິງ ການເອົາຊັບເຄື່ອນທີ່ມາໄວ້ເປັນຂອງກາງ ຕາມຄໍາສັ່ງຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ອົງການປະຕິບັດຄໍາຕັດສິນຂອງສານ;

6. **ການອາຍັດຊັບ** ໝາຍເຖິງ ການບໍ່ອະນຸຍາດໃຫ້ຊື້, ຂາຍ, ມອບ, ໂອນ, ແລກປ່ຽນ, ຈໍານໍາ, ຈໍານອງ, ຄໍ້າປະກັນ, ຕໍ່ເຕີມ, ສ້ອມແປງ, ທໍາລາຍ ຫຼື ປ່ຽນແປງ ແລະ ອື່ນໆ ກ່ຽວກັບຊັບເຄື່ອນທີ່ ຫຼື ຊັບຄົງທີ່ ລວມທັງບັນຊີເງິນຝາກໃນທະນາຄານ ທີ່ພົວພັນກັບຄະດີ ຕາມຄໍາສັ່ງຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ອົງການປະຕິບັດຄໍາຕັດສິນຂອງສານ;

7. **ການຮິບຊັບ** ໝາຍເຖິງ ການເອົາຊັບທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ທີ່ເປັນກໍາມະສິດຂອງຜູ້ກະທໍາຜິດເປັນຂອງລັດ ຕາມຄໍາຕັດສິນຂອງສານ ໂດຍບໍ່ມີການໃຊ້ແທນ;

8. **ການຮິບວັດຖຸສິ່ງຂອງ** ໝາຍເຖິງ ການເອົາຊັບ, ວັດຖຸສິ່ງຂອງ ທີ່ພົວພັນກັບການກະທໍາຜິດ, ນໍາໃຊ້ເຂົ້າໃນການກະທໍາຜິດ ຫຼື ໄດ້ມາຈາກການກະທໍາຜິດເປັນຂອງລັດ ຫຼື ທໍາລາຍຖິ້ມ ຕາມຄໍາຕັດສິນຂອງສານ;

9. **ເງິນຮິບ ໝາຍເຖິງ** ເງິນທີ່ສານຕັດສິນໃຫ້ຮິບເປັນຂອງລັດ;

10. **ການໂຈະການປະຕິບັດຄໍາຕັດສິນ** ໝາຍເຖິງ ການຢຸດ ການປະຕິບັດຄໍາຕັດສິນຂອງສານໄວ້ຊົ່ວຄາວ ເມື່ອໝົດສາເຫດຂອງການໂຈະແລ້ວ ກໍຕ້ອງສືບຕໍ່ປະຕິບັດ;

11. **ການປ່ຽນແປງການປະຕິບັດຄໍາຕັດສິນ** ໝາຍເຖິງ ການປ່ຽນແປງການປະຕິບັດຄໍາຕັດສິນຂອງສານ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ທີ່ເຫັນວ່າບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບຄໍາຕັດສິນຂອງສານ ຫຼື ກົດໝາຍ;

12. **ການຍົກເລີກການປະຕິບັດຄໍາຕັດສິນ** ໝາຍເຖິງ ການຢຸດເຊົາການປະຕິບັດຄໍາຕັດສິນຂອງສານ ກ່ຽວກັບການຈ່າຍຄ່າທໍານຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຮິບ ຕາມຄໍາຕັດສິນຍົກເລີກຂອງສານ;

13. **ການລົບລ້າງການປະຕິບັດຄໍາຕັດສິນ** ໝາຍເຖິງ ການຍົກເລີກທັງໝົດການປະຕິບັດຄໍາຕັດສິນຂອງສານ ຜ່ານມາແຕ່ຕົ້ນຕະຫຼອດປາຍ;

14. **ການປະຕິບັດພາງ** ໝາຍເຖິງ ການປະຕິບັດຄໍາຕັດສິນຂອງສານ ສ່ວນໃດສ່ວນໜຶ່ງ ທີ່ເຫັນວ່າມີຄວາມຈໍາເປັນຮີບດ່ວນກ່ອນຄໍາຕັດສິນ ຫຼື ຄໍາພິພາກສານັ້ນ ໃຊ້ໄດ້ຢ່າງເດັດຂາດ ຕາມຄໍາຕັດສິນຂອງສານຂັ້ນຕົ້ນ ຫຼື ຂັ້ນອຸທອນ.

**ມາດຕາ 4 (ໃໝ່) ນະໂຍບາຍຂອງລັດ ກ່ຽວກັບການປະຕິບັດຄໍາຕັດສິນຂອງສານ**

ລັດ ສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ແກ່ການປະຕິບັດຄໍາຕັດສິນຂອງສານ ດ້ວຍການວາງນະໂຍບາຍ, ກໍານົດລະບຽບການ, ສະໜອງງົບປະມານ, ປະກອບບຸກຄະລາກອນ, ພາຫະນະ ແລະ ວັດຖຸປະກອນຮັບໃຊ້ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມວ່ອງໄວ, ຖືກຕ້ອງ ແລະ ເປັນທໍາ.

ລັດ ສົ່ງເສີມການໂຄສະນາ, ສຶກສາອົບຮົມ ໃຫ້ພົນລະເມືອງ, ການຈັດຕັ້ງຂອງລັດ, ຂອງສັງຄົມ, ວິສາຫະກິດ ຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມືໃນການປະຕິບັດຄຳຕັດສິນຂອງສານ.

ລັດ ຊຸກຍູ້ ໃຫ້ຄູ່ຄວາມ ປະຕິບັດຄຳຕັດສິນຂອງສານດ້ວຍຄວາມສະໝັກໃຈ.

**ມາດຕາ 5 (ປັບປຸງ) ຫຼັກການໃນການປະຕິບັດຄຳຕັດສິນຂອງສານ**

ຫຼັກການໃນການປະຕິບັດຄຳຕັດສິນຂອງສານ ມີ ດັ່ງນີ້:

1. ຖືກຕ້ອງຕາມກົດໝາຍ, ຄຳຕັດສິນຂອງສານ ແລະ ຄວາມເປັນຈິງ;
2. ປະຕິບັດດ້ວຍຄວາມສະໝັກໃຈ;
3. ສະເໝີພາບ;
4. ສຶກສາອົບຮົມ;
5. ເຂັ້ມງວດ, ເດັດຂາດ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ;
6. ປະສານສົມທົບ.

**ມາດຕາ 6 (ໃໝ່) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ແກ່ພະນັກງານປະຕິບັດຄຳຕັດສິນຂອງສານ ໂດຍສອດຄ່ອງກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II

## ຄຳຕັດສິນຂອງສານ

**ມາດຕາ 7 (ໃໝ່) ຄຳຕັດສິນຂອງສານ**

ຄຳຕັດສິນຂອງສານ ແມ່ນ ຄຳຕົກລົງຂອງສານ ຊຶ່ງປະກອບດ້ວຍ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານ.

**ມາດຕາ 8 (ປັບປຸງ) ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ**

ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແມ່ນ ຄຳຕັດສິນ ຫຼື ຄຳພິພາກສາ ຊຶ່ງຄູ່ຄວາມ, ບຸກຄົນທີສາມ ບໍ່ໄດ້ຂໍອຸທອນ, ບໍ່ໄດ້ຂໍລົບລ້າງ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ບໍ່ໄດ້ສະເໜີຄັດຄ້ານ; ຄຳຊີ້ຂາດ, ຄຳພິພາກສາຂອງສານປະຊາຊົນສູງສຸດ; ຄຳສັ່ງໃຫ້ປະຕິບັດຜົນການໄກ່ເກ່ຍຂອງສານ; ຄຳຊີ້ຂາດກ່ຽວກັບການປະຕິບັດບົດບັນທຶກການໄກ່ເກ່ຍ ຫຼື ຄຳຕັດສິນຂອງກຳມະການຕັດສິນພາຍໃນ; ຄຳຕັດສິນຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ ຫຼື ຄຳຕັດສິນຢັ້ງຢືນ ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ.

**ມາດຕາ 9 (ປັບປຸງ) ຄຳຕັດສິນຂອງສານທີ່ນຳມາປະຕິບັດ**

ຄຳຕັດສິນຂອງສານທີ່ນຳມາປະຕິບັດ ມີ ດັ່ງນີ້:

1. ຄຳຕັດສິນ ແລະ ຄຳພິພາກສາຄະດີແພ່ງ ທີ່ໃຊ້ໄດ້ຢ່າງເດັດຂາດ;

2. ຄຳຕັດສິນ ແລະ ຄຳພິພາກສາຄະດີອາຍາ ທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ ຫຼື ໂທດຣິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ;

3. ຄຳຊີ້ຂາດ ແລະ ຄຳພິພາກສາຄະດີແພ່ງ ຂອງສານປະຊາຊົນສູງສຸດ ທີ່ບໍ່ສັ່ງຄະດີໃຫ້ສານຂັ້ນລຸ່ມພິຈາລະນາຄືນໃໝ່;

4. ຄຳຊີ້ຂາດ ແລະ ຄຳພິພາກສາຄະດີອາຍາ ຂອງສານປະຊາຊົນສູງສຸດ ທີ່ບໍ່ສັ່ງຄະດີໃຫ້ສານຂັ້ນລຸ່ມພິຈາລະນາຄືນໃໝ່ ກ່ຽວກັບຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ ຫຼື ໂທດຣິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ;

5. ຄຳຕັດສິນ ຫຼື ຄຳພິພາກສາ ໃຫ້ປະຕິບັດພາງ;

6. ຄຳສັ່ງ ໃຫ້ປະຕິບັດບົດບັນທຶກການໄກ່ເກ່ຍຂອງສານ;

7. ຄຳຊີ້ຂາດ ໃຫ້ປະຕິບັດບົດບັນທຶກການໄກ່ເກ່ຍ ແລະ ຄຳຕັດສິນ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

8. ຄຳຕັດສິນ ຫຼື ຄຳພິພາກສາຮັບຮູ້ ຄຳຕັດສິນຂອງສານຕ່າງປະເທດ;

9. ຄຳຕັດສິນ ຫຼື ຄຳພິພາກສາຢັ້ງຢືນ ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ.

**ມາດຕາ 10 (ປັບປຸງ) ຜົນບັງຄັບປະຕິບັດຂອງຄຳຕັດສິນຂອງສານ**

ຄຳຕັດສິນຂອງສານ ທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ມີຜົນບັງຄັບຕໍ່ບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຊຶ່ງຕ້ອງໄດ້ປະຕິບັດຢ່າງເຂັ້ມງວດ.

ທຸກອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ, ວິສາຫະກິດ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ ພ້ອມທັງມີພັນທະໃຫ້ການຮ່ວມມື, ຊ່ວຍເຫຼືອອັນຈຳເປັນ ຕໍ່ການປະຕິບັດຄຳຕັດສິນຂອງສານ.

**ມາດຕາ 11 (ປັບປຸງ) ການສົ່ງຄຳຕັດສິນຂອງສານ**

ສານປະຊາຊົນທີ່ກ່ຽວຂ້ອງ ຕ້ອງສົ່ງຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ, ອົງການໄອຍະການປະຊາຊົນ ແລະ ຂະແໜງການປ້ອງກັນຄວາມສະຫງົບ ສຳລັບຄຳຕັດສິນຄະດີອາຍາ ພາຍໃນເວລາ ສາມສິບວັນ ນັບແຕ່ວັນຄຳຕັດສິນໃຊ້ໄດ້ຢ່າງເດັດຂາດ ເປັນຕົ້ນໄປ.

**ມາດຕາ 12 (ປັບປຸງ) ການຖອນຕົວ ແລະ ການຄ້ານຕົວ**

ພະນັກງານປະຕິບັດຄຳຕັດສິນຂອງສານ ມີສິດຖອນຕົວອອກຈາກການປະຕິບັດຄຳຕັດສິນຂອງສານ ຖ້າຫາກເຫັນວ່າຕົນເປັນຍາດພີ່ນ້ອງ, ມີຜົນປະໂຫຍດຮ່ວມ ຫຼື ມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດໜຶ່ງ. ພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ຈະຖອນຕົວຕ້ອງສະເໜີເຈດຈຳນົງຂອງຕົນ ພ້ອມດ້ວຍເຫດຜົນເປັນລາຍລັກອັກສອນ ຕໍ່ຫົວໜ້າກົມ, ກອງ ຫຼື ຫ້ອງປະຕິບັດຄຳຕັດສິນຂອງສານ ທີ່ກ່ຽວຂ້ອງ.

ຄູ່ຄວາມ ມີສິດຄ້ານຕົວພະນັກງານປະຕິບັດຄຳຕັດສິນຂອງສານ ຖ້າຫາກເຫັນວ່າມີສາເຫດຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້. ການຄ້ານຕົວ ຕ້ອງສະເໜີເຈດຈຳນົງຂອງຕົນພ້ອມດ້ວຍເຫດຜົນ ຢ່າງເປັນລາຍລັກອັກສອນ ຕໍ່ອົງການປະຕິບັດຄຳຕັດສິນຂອງສານ ເພື່ອພິຈາລະນາ.

ພາຍຫຼັງໄດ້ຮັບການສະເໜີຖອນຕົວ ຫຼື ຄ້ານຕົວ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງພິຈາລະນາພາຍໃນເວລາ ສິບຫ້າວັນ, ຖ້າວ່າການສະເໜີຖອນຕົວ ຫຼື ຄ້ານຕົວ ຫາກມີເຫດຜົນພຽງພໍ ກໍໃຫ້ຖອນຕົວ ແລ້ວມອບຄະດີຢ່າງເປັນລາຍລັກອັກສອນ ໃຫ້ຜູ້ໃໝ່ສືບຕໍ່ປະຕິບັດ.

### ມາດຕາ 13 (ໃໝ່) ພາສາ ທີ່ນຳໃຊ້ເຂົ້າໃນການປະຕິບັດຄຳຕັດສິນຂອງສານ

ການປະຕິບັດຄຳຕັດສິນຂອງສານ ຕ້ອງນຳໃຊ້ພາສາລາວ, ໃນກໍລະນີມີເອກະສານເປັນພາສາຕ່າງປະເທດ, ພາສາເຜົ່າ ຫຼື ມີຜູ້ເຂົ້າຮ່ວມໃດໜຶ່ງ ໃນການປະຕິບັດຄຳຕັດສິນຂອງສານ ຫາກບໍ່ຮູ້ພາສາລາວ ກໍໃຫ້ແປເປັນພາສາລາວ ຫຼື ມີຜູ້ແປພາສາ.

### ມາດຕາ 14 (ໃໝ່) ການປົກປ້ອງ

ພະນັກງານປະຕິບັດຄຳຕັດສິນຂອງສານ ລວມທັງຜູ້ເຂົ້າຮ່ວມໃນການປະຕິບັດຄຳຕັດສິນຂອງສານ ຕ້ອງໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການຂົ່ມຂູ່ຕໍ່ ຊີວິດ, ສຸຂະພາບ, ຊື່ສຽງ, ກຽດສັກສີ, ຊັບສິນສ່ວນຕົວ ຫຼື ຂອງຄອບຄົວ.

## ພາກທີ III
## ການປະຕິບັດຄຳຕັດສິນຄະດີແພ່ງ
### ໝວດທີ 1
### ຮູບການປະຕິບັດ

### ມາດຕາ 15 (ໃໝ່) ຮູບການປະຕິບັດຄຳຕັດສິນຂອງສານ

ການປະຕິບັດຄຳຕັດສິນຂອງສານ ມີ ສອງຮູບການ ດັ່ງນີ້:

1. ການປະຕິບັດດ້ວຍຄວາມສະໝັກໃຈ;
2. ການບັງຄັບປະຕິບັດ.

### ມາດຕາ 16 (ໃໝ່) ການປະຕິບັດດ້ວຍຄວາມສະໝັກໃຈ

ການປະຕິບັດດ້ວຍຄວາມສະໝັກໃຈ ແມ່ນ ການຕົກລົງຂອງຄູ່ຄວາມໃນການປະຕິບັດ ຫຼື ບໍ່ປະຕິບັດຕາມຄຳຕັດສິນຂອງສານ ຊຶ່ງການຕົກລົງນັ້ນ ຕ້ອງບໍ່ຂັດກັບກົດໝາຍ ແລະ ບໍ່ສ້າງຄວາມເສັຍປະໂຫຍດໃຫ້ແກ່ ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ.

### ມາດຕາ 17 (ໃໝ່) ການບັງຄັບປະຕິບັດ

ການບັງຄັບປະຕິບັດ ແມ່ນ ການນຳໃຊ້ສິດ ແລະ ໜ້າທີ່ ຕາມກົດໝາຍ ຂອງອົງການປະຕິບັດຄຳຕັດສິນຂອງສານ ເພື່ອບັງຄັບໃຫ້ຄູ່ຄວາມປະຕິບັດຕາມຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃນກໍລະນີ ຄູ່ຄວາມບໍ່ປະຕິບັດດ້ວຍຄວາມສະໝັກໃຈ ຫຼື ບໍ່ປະຕິບັດຕາມການຕົກລົງ.

## ໝວດທີ 2
## ການປະຕິບັດດ້ວຍຄວາມສະໝັກໃຈ

**ມາດຕາ 18 (ໃໝ່) ການແຈ້ງຄຳຕັດສິນຂອງສານ**

ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງຮຽກຄູ່ຄວາມເຂົ້າມາ ເພື່ອແຈ້ງເນື້ອໃນຄຳຕັດສິນ ພ້ອມທັງແນະນຳ ແລະ ຊຸກຍູ້ໃຫ້ປະຕິບັດດ້ວຍຄວາມສະໝັກໃຈ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ເປັນຕົ້ນໄປ, ການແຈ້ງດັ່ງກ່າວ ຕ້ອງເຮັດບົດບັນທຶກ, ລົງລາຍເຊັນ ຫຼື ແປະໂປ້ມືທຸກຄັ້ງ.

**ມາດຕາ 19 (ໃໝ່) ວິທີການປະຕິບັດ**

ພາຍຫຼັງໄດ້ຮັບຊາບການແຈ້ງຄຳຕັດສິນຂອງສານແລ້ວ ຄູ່ຄວາມຕ້ອງດຳເນີນການປະຕິບັດຕາມວິທີ ດັ່ງນີ້:

1. ປຶກສາຫາລື ວິທີການປະຕິບັດດ້ວຍກັນເອງ;
2. ກຳນົດເວລາປະຕິບັດ;
3. ການຮັບປະກັນການປະຕິບັດ;
4. ບັນຫາອື່ນທີ່ກ່ຽວພັນກັບການປະຕິບັດ.

ໃນໄລຍະເວລາການປະຕິບັດດ້ວຍຄວາມສະໝັກໃຈ, ຄູ່ຄວາມ ມີສິດສະເໜີຕໍ່ອົງການປະຕິບັດຄຳຕັດສິນຂອງສານ ນຳໃຊ້ມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53 ຂອງກົດໝາຍສະບັບນີ້.

ໃນກໍລະນີ ປະຕິບັດສຳເລັດແລ້ວ ອົງການປະຕິບັດຄຳຕັດສິນຂອງສານ ຈະຢັ້ງຢືນການປະຕິບັດຄຳຕັດສິນຂອງສານ ຕາມການຮ້ອງຂໍຂອງຄູ່ຄວາມຝ່າຍໃດໜຶ່ງ.

ສຳລັບການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ນຳໄປຈັດຕັ້ງປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຫາ ມາດຕາ 63 ຂອງກົດໝາຍສະບັບນີ້.

## ໝວດທີ 3
## ການບັງຄັບປະຕິບັດ

### ກ. ການອອກຄຳສັ່ງປະຕິບັດຄຳຕັດສິນຂອງສານ

**ມາດຕາ 20 (ໃໝ່) ການອອກຄຳສັ່ງປະຕິບັດຄຳຕັດສິນຂອງສານ**

ຫົວໜ້າ ກົມ, ກອງ, ຫ້ອງປະຕິບັດຄຳຕັດສິນຂອງສານ ຕ້ອງອອກຄຳສັ່ງປະຕິບັດຄຳຕັດສິນຂອງສານ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນທີ່ຄູ່ຄວາມບໍ່ປະຕິບັດດ້ວຍຄວາມສະໝັກໃຈ ຫຼື ບໍ່ປະຕິບັດຕາມການຕົກລົງ ເປັນຕົ້ນໄປ.

ຄຳສັ່ງປະຕິບັດຄຳຕັດສິນຂອງສານ ຕ້ອງສົ່ງໃຫ້ຄູ່ຄວາມ, ບຸກຄົນທີສາມ ແລະ ອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ.

**ມາດຕາ 21 (ປັບປຸງ) ການຄົ້ນຄວ້າຄຳຕັດສິນຂອງສານ**

ພາຍຫຼັງມີຄຳສັ່ງປະຕິບັດຄຳຕັດສິນຂອງສານແລ້ວ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງຄົ້ນຄວ້າຄຳຕັດສິນຂອງສານ ໃຫ້ລະອຽດ, ເຂົ້າໃຈ ພາຍໃນເວລາ ສິບວັນ ລັດຖະການ ພ້ອມກັນນັ້ນກໍ ກະກຽມເງື່ອນໄຂຕ່າງໆ ເພື່ອປະຕິບັດ ດັ່ງນີ້:

1. ສະຫຼຸບເນື້ອໃນຄຳຕັດສິນຂອງສານ ທີ່ຈະນຳມາປະຕິບັດ;
2. ສ້າງແຜນການ ກ່ຽວກັບການປະຕິບັດ;
3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
4. ກະກຽມເງື່ອນໄຂອື່ນທີ່ຖືກຕ້ອງ ຕາມກົດໝາຍ.

**ມາດຕາ 22 (ໃໝ່) ການແຈ້ງໃຫ້ປະຕິບັດຄຳຕັດສິນຂອງສານ**

ການແຈ້ງໃຫ້ປະຕິບັດຄຳຕັດສິນຂອງສານ ປະຕິບັດ ດັ່ງນີ້:

1. ຮຽກຄູ່ຄວາມເຂົ້າມາອົງການປະຕິບັດຄຳຕັດສິນຂອງສານ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຄົ້ນຄວ້າຄຳຕັດສິນສຳເລັດ ເພື່ອແຈ້ງເນື້ອໃນຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຊາບ ພ້ອມທັງແນະນຳ ແລະ ຊຸກຍູ້ໃຫ້ປະຕິບັດ. ໃນເວລາຄູ່ຄວາມ ຫຼື ຜູ້ຖືກປະຕິບັດຄຳຕັດສິນຂອງສານ ເຂົ້າມາຮັບຊາບການແຈ້ງນັ້ນ ຕ້ອງເຮັດບົດບັນທຶກທຸກຄັ້ງ ພ້ອມທັງລົງລາຍເຊັນ ແລະ ແປະໂປ້ມື, ຖ້າຜູ້ກ່ຽວ ຫາກບໍ່ຍອມລົງລາຍເຊັນໃນບົດບັນທຶກ, ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງຂຽນລົງໃນບົດບັນທຶກ ນັ້ນໄວ້;

2. ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ເຂົ້າມາອົງການປະຕິບັດຄຳຕັດສິນຂອງສານ ຕາມໝາຍຮຽກ, ຊຶ່ງມີຂໍ້ມູນວ່າຜູ້ກ່ຽວບໍ່ຢູ່ໃນສະຖານທີ່ດັ່ງກ່າວ, ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງລົງໄປແຈ້ງກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມທີ່ຢູ່ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ໂດຍແຈ້ງໃຫ້ຍາດໃກ້ຊິດຜູ້ໃດໜຶ່ງ ທີ່ອາໄສຢູ່ຮ່ວມກັນກັບຜູ້ກ່ຽວ ເຊັ່ນ ຜົວ, ເມຍ, ພໍ່, ແມ່ ຫຼື ລູກ ແລະ ໃຫ້ຜູ້ຖືກແຈ້ງນັ້ນ ເຊັນຮັບຮູ້;

3. ໃນກໍລະນີ ບໍ່ສາມາດແຈ້ງໂດຍກົງ ຫຼື ໃຫ້ຍາດໃກ້ຊິດໄດ້ ໃຫ້ຕິດຄຳສັ່ງປະຕິບັດຄຳຕັດສິນຂອງສານ ຢູ່ອົງການປົກຄອງບ້ານ ແລະ ບ່ອນຢູ່ສຸດທ້າຍ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ແລ້ວເຮັດບົດບັນທຶກຮ່ວມກັບອົງການປົກຄອງບ້ານ;

4. ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ມີທີ່ຢູ່ບໍ່ແນ່ນອນ ຫຼື ບໍ່ຮູ້ທີ່ຢູ່ຂອງຜູ້ກ່ຽວ ບົນພື້ນຖານການສະເໜີຂອງຄູ່ຄວາມໃດໜຶ່ງ ໃຫ້ແຈ້ງຜ່ານພາຫະນະສື່ມວນຊົນ ຕາມກົດໝາຍທີ່ກ່ຽວຂ້ອງ.

ການແຈ້ງຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3 ແລະ ຂໍ້ 4 ຂອງມາດຕານີ້ ໃຫ້ຖືວ່າຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ຮັບຊາບ ຫຼັງຈາກ ສິບວັນ ລັດຖະການ ນັບແຕ່ວັນໄດ້ແຈ້ງ ເປັນຕົ້ນໄປ.

**ມາດຕາ 23 (ໃໝ່) ກຳນົດເວລາການປະຕິບັດຄຳຕັດສິນຂອງສານ**

ພາຍຫຼັງໄດ້ແຈ້ງໃຫ້ປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕ້ອງປະຕິບັດພັນທະຕ່າງໆຕາມຄຳຕັດສິນຂອງສານ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບການແຈ້ງນັ້ນ ເປັນຕົ້ນໄປ.

ໃນກຳນົດເວລາດັ່ງກ່າວ ຖ້າຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກມີເຈດຕະນາຫຼົບຫຼີກການປະຕິບັດນັ້ນ ອົງການປະຕິບັດຄຳຕັດສິນຂອງສານ ກໍສາມາດ ກວດກາ, ຂຶ້ນບັນຊີ ຊັບສິນຂອງຜູ້ກ່ຽວ, ອອກຄຳສັ່ງອາຍັດຊັບ ຫຼື ຍຶດຊັບ ຖ້າວ່າມາດຕະການດັ່ງກ່າວ ຫາກຍັງບໍ່ທັນໄດ້ນຳໃຊ້ມາກ່ອນ.

ພາຍໃນເວລາ ສາມສິບວັນ ຖ້າຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກໄດ້ປະຕິບັດຄຳຕັດສິນຢ່າງຄົບຖ້ວນແລ້ວ ກໍຖືວ່າການປະຕິບັດຄຳຕັດສິນຂອງສານນັ້ນສິ້ນສຸດລົງ.

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກບໍ່ປະຕິບັດ ຫຼື ປະຕິບັດບໍ່ຄົບຖ້ວນ ພາຍໃນເວລາທີ່ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ ອົງການປະຕິບັດຄຳຕັດສິນຂອງສານ ສາມາດນຳໃຊ້ມາດຕະການໃດໜຶ່ງໃນການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53 ຂອງກົດໝາຍສະບັບນີ້.

### ມາດຕາ 24 (ໃໝ່) ການກວດກາ ແລະ ຂຶ້ນບັນຊີຊັບ

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກບໍ່ປະຕິບັດ ຫຼື ປະຕິບັດຍັງບໍ່ທັນຄົບຖ້ວນຕາມຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງກວດກາ ແລະ ຂຶ້ນບັນຊີຊັບຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ.

ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ລົງກວດກາຊັບ ຢູ່ສະຖານທີ່ສົງໄສວ່າມີ ຊັບ, ບັນຊີເງິນຝາກ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ເຊັ່ນ ເຮືອນ, ສະຖາບັນການເງິນ ຫຼື ບ່ອນອື່ນທີ່ກ່ຽວຂ້ອງ.

ເຈົ້າໜີ້ ມີພັນທະສະໜອງຂໍ້ມູນເປັນລາຍລັກອັກສອນ ກ່ຽວກັບຊັບຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ.

ໃນການກວດກາຊັບ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງເຮັດບົດບັນທຶກ ພ້ອມທັງຂຽນລາຍລະອຽດຂອງຊັບທີ່ກວດພົບ ໂດຍການເຂົ້າຮ່ວມຂອງເຈົ້າຂອງຊັບ ແລະ ອົງການປົກຄອງບ້ານ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ. ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງລາຍງານຜົນຂອງການລົງກວດກາ ຕໍ່ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານ ໃນກໍລະນີຈຳເປັນຕ້ອງສະເໜີອອກຄຳສັ່ງອາຍັດ ຫຼື ຍຶດ ຊັບທີ່ກວດພົບນັ້ນໄວ້.

## ຂ. ການຕີລາຄາຊັບ

### ມາດຕາ 25 (ໃໝ່) ການຕີລາຄາຊັບ

ການຕີລາຄາຊັບ ແມ່ນ ການປະເມີນລາຄາ ຫຼື ກຳນົດມູນຄ່າຊັບ ຕາມສະພາບຄວາມເປັນຈິງຂອງຊັບແຕ່ລະໄລຍະ.

### ມາດຕາ 26 (ໃໝ່) ວິທີການຕີລາຄາຊັບ

ການຕີລາຄາຊັບໃຫ້ດຳເນີນຕາມວິທີ ດັ່ງນີ້:

1. ການຕົກລົງລາຄາໂດຍຄູ່ຄວາມ

ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງຮຽກຄູ່ຄວາມເຂົ້າມາ ເພື່ອຕົກລົງລາຄາຊັບຄ້ຳປະກັນ ຫຼື ຊັບທີ່ກວດພົບ, ການຕົກລົງດັ່ງກ່າວຕ້ອງເຮັດບົດບັນທຶກ ແລະ ໃຫ້ຖືເອົາລາຄານັ້ນເປັນລາຄາປະກາດຂາຍຕາມຂັ້ນຕອນຂອງກົດໝາຍ.

ຄູ່ຄວາມ ສາມາດຕົກລົງລາຄາຊັບໄດ້ທຸກຂັ້ນຕອນ ໃນການປະຕິບັດຄຳຕັດສິນຂອງສານ.

2. ການຕີລາຄາໂດຍຜູ້ຊ່ຽວຊານ ຫຼື ນິຕິບຸກຄົນ ຕາມການສະເໜີຂອງຄູ່ຄວາມ

ໃນກໍລະນີ ຄູ່ຄວາມບໍ່ສາມາດຕົກລົງລາຄາຊັບໄດ້ ຄູ່ຄວາມສາມາດສະເໜີເອົາຜູ້ຊ່ຽວຊານ ຫຼື ນິຕິບຸກຄົນໃດໜຶ່ງ ເພື່ອມາຕີລາຄາຊັບ. ການຕີລາຄາຊັບໃນກໍລະນີດັ່ງກ່າວ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ເປັນຜູ້ອອກຂໍ້ຕົກລົງ ໃຫ້ຜູ້ຊ່ຽວຊານ ຫຼື ນິຕິບຸກຄົນ ດຳເນີນການຕີລາຄາຊັບ ໂດຍກຳນົດເວລາ,

ສະຖານທີ່, ຊັບທີ່ເປັນເປົ້າໝາຍ, ຄວາມຮັບຜິດຊອບຂອງຜູ້ຕີລາຄາ, ຜົນຕອບແທນ ແລະ ບັນຫາສຳຄັນອື່ນ. ພາຍຫຼັງສຳເລັດແລ້ວ ໃຫ້ຖືເອົາລາຄານັ້ນເປັນລາຄາປະກາດຂາຍຕາມຂັ້ນຕອນຂອງກົດໝາຍ. ຖ້າຫາກຄູ່ຄວາມຍິນດີຮັບເອົາລາຄາດັ່ງກ່າວ.

ສຳລັບຄ່າໃຊ້ຈ່າຍໃຫ້ປະຕິບັດຕາມການຕົກລົງຂອງຄູ່ຄວາມ.

3. ການຕີລາຄາໂດຍຄະນະກຳມະການ

ຊັບທີ່ຄູ່ຄວາມບໍ່ສາມາດຕົກລົງລາຄາກັນໄດ້ ຫຼື ບໍ່ຕົກລົງໃຫ້ຜູ້ຊ່ຽວຊານ, ນິຕິບຸກຄົນ ຕີລາຄາ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ແຕ່ງຕັ້ງຄະນະກຳມະການເປັນຜູ້ຕີລາຄາຊັບ.

ຄະນະກຳມະການ ປະກອບດ້ວຍ ພະນັກງານປະຕິບັດຄຳຕັດສິນຂອງສານ, ຜູ້ຕາງໜ້າສຳນັກງານອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຜູ້ຊ່ຽວຊານ ຫຼື ຜູ້ມີປະສົບການທີ່ກ່ຽວຂ້ອງ, ນາຍບ້ານ ແລະ ບຸກຄົນອື່ນທີ່ເຫັນວ່າມີຄວາມຈຳເປັນ.

ຄະນະກຳມະການ ເປັນຜູ້ຕີລາຄາຊັບ ໃນເວລາປະຕິບັດຄຳຕັດສິນຂອງສານ ຕາມຂໍ້ຕົກລົງແຕ່ງຕັ້ງ ແລະ ຄະນະກຳມະການດັ່ງກ່າວ ຈະສິ້ນສຸດລົງເມື່ອປະຕິບັດໜ້າທີ່ສຳເລັດ.

ຄະນະກຳມະການ ມີພາລະບົດບາດໃນການຕີລາຄາຊັບ ທີ່ພົວພັນກັບການປະຕິບັດຄຳຕັດສິນຂອງສານ ຕາມຂໍ້ຕົກລົງທີ່ກ່ຽວຂ້ອງ. ພາຍຫຼັງຕີລາຄາສຳເລັດແລ້ວ ກໍມອບໃຫ້ອົງການປະຕິບັດຄຳຕັດສິນຂອງສານ ເພື່ອສືບຕໍ່ປະຕິບັດຕາມຂັ້ນຕອນຂອງກົດໝາຍ.

**ມາດຕາ 27 (ໃໝ່) ສິດ ແລະ ໜ້າທີ່ຂອງຄະນະກຳມະການ**

ຄະນະກຳມະການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນຊັບທີ່ຈະຕີລາຄາ ໃຫ້ຖືກຕ້ອງຕາມຄວາມເປັນຈິງ;
2. ອະທິບາຍຊີ້ແຈງ ໃຫ້ເຈົ້າຂອງຊັບຊາບ ກ່ຽວກັບການຕີລາຄາຊັບນັ້ນ;
3. ກຳນົດມູນຄ່າຂອງຊັບ;
4. ສະຫຼຸບ, ລາຍງານ ຜົນການຕີລາຄາຊັບ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ;
5. ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຈາກການກະທຳໂດຍເຈດຕະນາ ໃນການຕີລາຄາຊັບ.

ຄະນະກຳມະການ ເຄື່ອນໄຫວປະຕິບັດ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ບົນຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ມີຄວາມໂປ່ງໃສ, ຍຸຕິທຳ, ສາມາດກວດສອບໄດ້, ເຄົາລົບ ແລະ ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 28 (ໃໝ່) ຂັ້ນຕອນການຕີລາຄາຊັບ**

ການຕີລາຄາຊັບ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການກະກຽມ;
2. ການດຳເນີນຕີລາຄາຊັບ;
3. ການແຈ້ງຜົນຂອງການຕີລາຄາ;
4. ການຄັດຄ້ານລາຄາ.

**ມາດຕາ 29 (ໃໝ່) ການກະກຽມ**

ການກະກຽມຕີລາຄາຊັບໃຫ້ດຳເນີນ ດັ່ງນີ້:

1. ການເກັບກຳຂໍ້ມູນ

ເພື່ອຮັບປະກັນໃນການຕີລາຄາຊັບໃຫ້ມີຄວາມຖືກຕ້ອງນັ້ນ ພະນັກງານປະຕິບັດຄຳຕັດສິນຂອງສານ ຜູ້ຮັບຜິດຊອບຄະດີ ຕ້ອງກະກຽມຂໍ້ມູນຂອງຊັບທີ່ຈະຕີລາຄານັ້ນໃຫ້ລະອຽດ ເປັນຕົ້ນ ປະເພດ, ທີ່ຕັ້ງ, ຈຳນວນ, ເນື້ອທີ່ ຫຼື ບໍລິມາດຂອງຊັບ ແລະ ເອກະສານທີ່ກ່ຽວຂ້ອງ.

2. ການແຕ່ງຕັ້ງຄະນະກຳມະການ

ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງອອກຂໍ້ຕົກລົງແຕ່ງຕັ້ງຄະນະກຳມະການ ເພື່ອຕີລາຄາຊັບ. ການປະກອບຄະນະກຳມະການ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂໍ້ 3 ຂອງກົດໝາຍສະບັບນີ້.

3. ການຂຶ້ນແຜນຕີລາຄາ

ຄະນະກຳມະການທີ່ໄດ້ຮັບການແຕ່ງຕັ້ງ ຕ້ອງສ້າງແຜນການລົງຕີລາຄາຊັບ, ໃນແຜນການນັ້ນຕ້ອງໄດ້ກຳນົດລາຍລະອຽດ ເຊັ່ນ ຈຸດປະສົງ, ວັນ, ເວລາ, ສະຖານທີ່, ເປົ້າໝາຍຜູ້ເຂົ້າຮ່ວມ ແລະ ງົບປະມານໃຊ້ຈ່າຍ ແລ້ວສະເໜີຕໍ່ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານ ເພື່ອອະນຸມັດ.

4. ການເຊີນຜູ້ເຂົ້າຮ່ວມ

ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງເຊີນ ໂຈດ, ຈຳເລີຍ, ບຸກຄົນທີສາມ, ເຈົ້າຂອງຊັບ ຫຼື ບຸກຄົນ, ນິຕິບຸກຄົນທີ່ກ່ຽວຂ້ອງ ເຂົ້າຮ່ວມການຕີລາຄາ ຢ່າງຊ້າໃຫ້ໄດ້ຮັບບັດເຊີນກ່ອນວັນຕີລາຄາສາມວັນ ລັດຖະການ, ໃນບັດເຊີນດັ່ງກ່າວຕ້ອງກຳນົດແຈ້ງ ກ່ຽວກັບ ວັນ, ເວລາ, ສະຖານທີ່ ແລະ ຈຸດປະສົງ.

**ມາດຕາ 30 (ໃໝ່) ການດຳເນີນການຕີລາຄາຊັບ**

ການດຳເນີນການຕີລາຄາຊັບໃຫ້ດຳເນີນ ດັ່ງນີ້:

1. ການເຕົ້າໂຮມຄະນະກຳມະການ ແລະ ຜູ້ເຂົ້າຮ່ວມ

ພາຍຫຼັງຄະນະກຳມະການຕີລາຄາຊັບ ໄດ້ເຕົ້າໂຮມຢ່າງຄົບຖ້ວນແລ້ວ, ຫົວໜ້າຄະນະກຳມະການ ຕ້ອງແຈ້ງຈຸດປະສົງ, ລາຍຊື່ຄະນະກຳມະການ, ຜູ້ເຂົ້າຮ່ວມ ແລະ ລາຍງານເນື້ອໃນຄຳຕັດສິນຂອງສານໂດຍຫຍໍ້, ການປະຕິບັດຄຳຕັດສິນຂອງສານໃນໄລຍະຜ່ານມາ, ເຫດຜົນໃນການຕີລາຄາຊັບ, ຂໍ້ມູນກ່ຽວກັບຊັບທີ່ໄດ້ເກັບກຳຜ່ານມາໃຫ້ຜູ້ເຂົ້າຮ່ວມຊາບ. ຈາກນັ້ນ, ຄະນະກຳມະການຈຶ່ງລົງກວດກາຊັບຕົວຈິງ.

2. ການກວດກາຊັບ

ຄະນະກຳມະການ ຕ້ອງລົງກວດກາເບິ່ງຊັບທີ່ຈະຕີລາຄາໃຫ້ລະອຽດ ເປັນຕົ້ນ ປະເພດ, ເນື້ອທີ່, ທີ່ຕັ້ງ, ຈຳນວນ, ບໍລິມາດ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບຊັບ. ການກວດກາແຕ່ລະຄັ້ງຕ້ອງເຮັດບົດບັນທຶກໃຫ້ຊັດເຈນ, ແລ້ວອ່ານຊ້ອງໜ້າໃຫ້ຜູ້ເຂົ້າຮ່ວມຟັງ ແລະ ລົງລາຍເຊັນໄວ້.

ສຳລັບການກວດກາຄຸນນະພາບຂອງຊັບຕົວຈິງນັ້ນ ໃຫ້ອີງໃສ່ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.

3. ການຕົກລົງລາຄາ

ຄະນະກຳມະການ ຕ້ອງຄົ້ນຄວ້າ, ວິເຄາະ, ວິໄຈ ບັນດາຂໍ້ມູນຫຼັກຖານທີ່ເກັບກຳໄດ້ ໂດຍອີງໃສ່ນິຕິກຳທີ່ກ່ຽວຂ້ອງ ແລ້ວພ້ອມກັນຕົກລົງລາຄາຊັບແຕ່ລະປະເພດ ແລະ ລົງລາຍເຊັນຮັບຮອງ.

ໃນກໍລະນີ ມີຄວາມຈຳເປັນຕ້ອງມີຄວາມເຫັນກ່ຽວກັບດ້ານເຕັກນິກ, ວິຊາການ ກ່ອນຈະຕົກລົງລາຄາ ຄະນະກຳມະການຕ້ອງສະເໜີຫາຂະແໜງການທີ່ກ່ຽວຂ້ອງ ເພື່ອຢັ້ງຢືນ.

4. ການສ້າງປຶ້ມບັນທຶກ

ໃນການກວດກາ ແລະ ຕີລາຄາຊັບທຸກຄັ້ງ ຄະນະກຳມະການ ຕ້ອງເຮັດປຶ້ມບັນທຶກຢ່າງລະອຽດ ໂດຍບົ່ງບອກ ວັນ, ເວລາ, ສະຖານທີ່, ຊື່ ແລະ ນາມສະກຸນ ຂອງຄະນະກຳມະການ, ຜູ້ເຂົ້າຮ່ວມ. ເນື້ອໃນປຶ້ມບັນທຶກຕ້ອງບົ່ງບອກຢ່າງຈະແຈ້ງ ເປັນຕົ້ນ ປະເພດ, ເນື້ອທີ່, ທີ່ຕັ້ງ, ຈຳນວນ, ບໍລິມາດ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບຊັບ.

ກໍລະນີ ຊັບທີ່ສາມາດຕີລາຄາໄດ້ກັບທີ່ ກໍໃຫ້ສ້າງປຶ້ມບັນທຶກຕາມເນື້ອໃນທີ່ກຳນົດໄວ້ເທິງນີ້ ລວມທັງບ່ອນອີງ ແລະ ເຫດຜົນການກຳນົດລາຄາຂອງຄະນະກຳມະການ ແລ້ວອ່ານໃຫ້ຜູ້ເຂົ້າຮ່ວມທັງໝົດຊາບ ແລະ ລົງລາຍເຊັນໄວ້ ພ້ອມທັງແຈ້ງເວລາໃນການຄັດຄ້ານໃຫ້ເຈົ້າຂອງຊັບຊາບ.

ກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ເຈົ້າຂອງຊັບ ຫາກບໍ່ເຂົ້າຮ່ວມການຕີລາຄາ ຫຼື ເຂົ້າຮ່ວມ ແຕ່ບໍ່ລົງລາຍເຊັນ ກໍໃຫ້ຂຽນແຈ້ງໃສ່ປຶ້ມບັນທຶກນັ້ນພ້ອມ.

**ມາດຕາ 31 (ໃໝ່) ການແຈ້ງຜົນຂອງການຕີລາຄາ**

ພາຍຫຼັງໄດ້ຕີລາຄາຊັບແລ້ວ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງຜົນຂອງການຕີລາຄານັ້ນເປັນລາຍລັກອັກສອນໃຫ້ ໂຈດ, ຈຳເລີຍ, ບຸກຄົນທີສາມ, ເຈົ້າຂອງຊັບຊາບ ພາຍໃນເວລາ ສາມວັນລັດຖະການ, ໃນແຈ້ງການດັ່ງກ່າວຕ້ອງຄັດຕິດປຶ້ມບັນທຶກຕີລາຄາໄປພ້ອມ.

**ມາດຕາ 32 (ໃໝ່) ການຄັດຄ້ານລາຄາ**

ການຄັດຄ້ານລາຄາ ສາມາດດຳເນີນ ດັ່ງນີ້:

1. ການຄັດຄ້ານ

ພາຍຫຼັງໂຈດ, ຈຳເລີຍ ບຸກຄົນທີສາມ, ເຈົ້າຂອງຊັບໄດ້ຮັບແຈ້ງຜົນຂອງການຕີລາຄາຊັບແລ້ວ, ຖ້າຫາກບໍ່ພໍໃຈຕໍ່ການຕີລາຄາຊັບຂອງຄະນະກຳມະການ ກໍມີສິດຄັດຄ້ານໂດຍຍື່ນຄຳຮ້ອງ ພ້ອມທັງສະເໜີເຫດຜົນທີ່ບໍ່ພໍໃຈ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບແຈ້ງຜົນຂອງການຕີລາຄານັ້ນ ເປັນຕົ້ນໄປ.

ການຄັດຄ້ານໃນກໍລະນີຕີລາຄາຊັບບໍ່ຄົບຖ້ວນ ໃຫ້ຍື່ນຄຳຮ້ອງຕໍ່ອົງການປະຕິບັດຄຳຕັດສິນຂອງສານກ່ຽວຂ້ອງທີ່ໄດ້ຕີລາຄາຜ່ານມານັ້ນ.

ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ເຈົ້າຂອງຊັບ ບໍ່ພໍໃຈຕໍ່ລາຄາ ຫຼື ການຕີລາຄາຊັບ ທີ່ບໍ່ຖືກເປົ້າໝາຍ ໃຫ້ຍື່ນຄຳຮ້ອງຕໍ່ອົງການ ຕາມກໍລະນີ ດັ່ງນີ້:

- ການຕີລາຄາຊັບຂອງຄະນະກຳມະການຂັ້ນເມືອງ ໃຫ້ຍື່ນຄຳຮ້ອງຕໍ່ກອງປະຕິບັດຄຳຕັດສິນຂອງສານ ປະຈຳ ແຂວງ, ນະຄອນຫຼວງ ເປັນຜູ້ພິຈາລະນາ;
- ການຕີລາຄາຊັບຂອງຄະນະກຳມະການຂັ້ນແຂວງ ໃຫ້ຍື່ນຄຳຮ້ອງຕໍ່ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ກະຊວງຍຸຕິທຳ ເປັນຜູ້ພິຈາລະນາ;
- ການຕີລາຄາຊັບຂອງຄະນະກຳມະການຂັ້ນກົມ ໃຫ້ຍື່ນຄຳຮ້ອງຕໍ່ລັດຖະມົນຕີກະຊວງຍຸຕິທຳ ເປັນຜູ້ພິຈາລະນາ.

2. ການຄົ້ນຄວ້າ ແລະ ແກ້ໄຂການຄັດຄ້ານການຕີລາຄາ

ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງຄົ້ນຄວ້າໃຫ້ສຳເລັດ ພາຍໃນເວລາ ສິບວັນ ລັດຖະການ, ຖ້າເຫັນວ່າບໍ່ມີເຫດຜົນກໍໃຫ້ແຈ້ງຕອບເປັນລາຍລັກອັກສອນແກ່ຜູ້ຮ້ອງຂໍ ພາຍໃນເວລາ ສາມວັນລັດຖະການ. ຖ້າເຫັນວ່າມີເຫດຜົນພຽງພໍ ຕ້ອງແຈ້ງໃຫ້ຄະນະກຳມະການຊາບ ພາຍໃນເວລາ ຫ້າວັນ ລັດຖະການ ເພື່ອຕີລາຄາຄືນໃໝ່. ກໍລະນີມີການລົບລ້າງການຕີລາຄາຜ່ານມາ ຕ້ອງອອກຄຳສັ່ງລົບລ້າງ ແລະ ຕີລາຄາຄືນໃໝ່ ແລ້ວແຈ້ງໃຫ້ຄະນະກຳມະການຊາບ ພາຍໃນເວລາ ສາມວັນ ລັດຖະການ.

ຜູ້ສະເໜີໃຫ້ຕີລາຄາຄືນໃໝ່ ຈະບໍ່ໄດ້ຮັບຜົດຊອບຕໍ່ຄ່າໃຊ້ຈ່າຍ ອັນເນື່ອງມາຈາກການຕີລາຄາຊັບບໍ່ຄົບຖ້ວນ, ບໍ່ຖືກເປົ້າໝາຍ, ມີຄວາມບໍ່ໂປ່ງໃສຂອງຄະນະກຳມະການ.

## ຄ. ການຍົກຍ້າຍ

### ມາດຕາ 33 (ໃໝ່) ການຍົກຍ້າຍ

ຊັບ ທີ່ຈະຂາຍ, ປະມູນຂາຍ ຫຼື ມອບ ເພື່ອໄລ່ລຽງໃຊ້ແທນໜີ້ສິນ ເມື່ອມີຜູ້ມາພົວພັນຊື້ ຫຼື ເຈົ້າໜີ້ເຫັນດີຮັບເອົາ ຊຶ່ງມີຜູ້ອາໄສຢູ່ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງອອກຄຳສັ່ງໃຫ້ຜູ້ຢູ່ອາໄສຍົກຍ້າຍອອກຈາກຊັບດັ່ງກ່າວ ໃນເວລາບໍ່ໃຫ້ເກີນ ເກົ້າສິບວັນ ນັບແຕ່ວັນໄດ້ຮັບຄຳສັ່ງຍົກຍ້າຍ ເປັນຕົ້ນໄປ.

ຄຳສັ່ງໃຫ້ຍົກຍ້າຍ ຕ້ອງສົ່ງໃຫ້ຜູ້ຄອບຄອງ ຫຼື ຜູ້ອາໄສຢູ່, ອົງການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ ເພື່ອໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ບຸກຄົນທີ່ອາໄສຢູ່ ມີເວລາກະກຽມຍົກຍ້າຍດ້ວຍຕົວເອງ ພາຍໃນເວລາທີ່ກຳນົດໄວ້ໃນຄຳສັ່ງນັ້ນ.

ພາຍຫຼັງໝົດກຳນົດເວລາຍົກຍ້າຍ ແຕ່ຜູ້ກ່ຽວບໍ່ໄດ້ຍົກຍ້າຍ, ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ລົງສຶກສາອົບຮົມຜູ້ກ່ຽວ ພ້ອມທັງເຮັດບົດບັນທຶກໄວ້ ເພື່ອເປັນຫຼັກຖານ.

ໃນກໍລະນີ ໃຫ້ເວລາຜູ້ກ່ຽວແລ້ວ ແຕ່ກໍຍັງບໍ່ປະຕິບັດ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງປະຕິບັດ ດັ່ງນີ້:

1. ສ້າງແຜນການຍົກຍ້າຍ;
2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ແຕ່ງຕັ້ງຄະນະກຳມະການຍົກຍ້າຍ;
3. ດຳເນີນການຍົກຍ້າຍ;
4. ສະຫຼຸບ ແລະ ລາຍງານ ການຍົກຍ້າຍຕໍ່ອົງການໄອຍະການປະຊາຊົນ, ສະພາປະຊາຊົນຂັ້ນແຂວງ ແລະ/ຫຼື ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ໃນກໍລະນີ ຜູ້ຖືກຍົກຍ້າຍ ບໍ່ມີບ່ອນຢູ່ ຫຼື ບ່ອນເກັບມ້ຽນວັດຖຸສິ່ງຂອງກ່ອນການຍົກຍ້າຍ, ເຈົ້າໜີ້ຕ້ອງຊອກ ຫຼື ເຊົ່າບ່ອນຢູ່ ໃຫ້ຜູ້ຖືກຍົກຍ້າຍຕາມຄວາມເໝາະສົມ ແຕ່ບໍ່ໃຫ້ເກີນ ໜຶ່ງປີ.

ໃນກໍລະນີ ຜູ້ຖືກຍົກຍ້າຍ ຫຼື ເຈົ້າຂອງຊັບ ບໍ່ເຂົ້າຄຸ້ມຄອງ ຫຼື ຮັບເອົາຊັບ ທີ່ຖືກຍົກຍ້າຍຢູ່ສະຖານທີ່ເຊົ່າ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນຍົກຍ້າຍ ເປັນຕົ້ນໄປ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ແຈ້ງໃຫ້ຜູ້ຖືກຍົກຍ້າຍ ຫຼື ເຈົ້າຂອງຊັບ ເຂົ້າຄຸ້ມຄອງ ຫຼື ຮັບເອົາຊັບ ພາຍໃນເວລາ ສາມສິບວັນ ນັບແຕ່ວັນອອກແຈ້ງການ ເປັນຕົ້ນໄປ. ຖ້າຜູ້ກ່ຽວບໍ່ເຂົ້າຄຸ້ມຄອງ ຫຼື ຮັບເອົາຊັບດັ່ງກ່າວ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ຂາຍຊັບຕາມລະບຽບການ ແລະ ນຳເງິນທີ່ຂາຍນັ້ນໄປຝາກໄວ້ຢູ່ທະນາຄານ ແລ້ວແຈ້ງຜູ້ກ່ຽວມາຮັບເອົາເງິນ.

ໃນການປະຕິບັດຄຳຕັດສິນຂອງສານ ກ່ຽວກັບການມອບ ຫຼື ການສົ່ງຊັບຄືນທີ່ຄືນ ຕາມຄຳຕັດສິນຂອງສານ ຖ້າຊັບດັ່ງກ່າວຍັງມີຜູ້ຄອບຄອງ ຫຼື ຜູ້ຢູ່ອາໄສ, ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງດຳເນີນຕາມທີ່ໄດ້ກຳນົດໄວ້ໃນວັກທີ ໜຶ່ງ, ສອງ ແລະ ວັກທີສາມ ຂອງມາດຕານີ້.

## 7. ການຂາຍຊັບ

### ມາດຕາ 34 (ໃໝ່) ການຂາຍຊັບ

ການຂາຍຊັບ ແມ່ນ ການຂາຍຊັບສິນ ທີ່ເປັນກຳມະສິດຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ຊັບທີ່ໄດ້ຮັບສິດຈາກເຈົ້າຂອງຊັບ ໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນ ພາຍຫຼັງໄດ້ຕີລາຄາແລ້ວ.

### ມາດຕາ 35 (ໃໝ່) ວິທີປະກາດຂາຍຊັບ

ກ່ອນການຕີລາຄາຊັບຂອງຄະນະກຳມະການນັ້ນ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງ ຮຽກຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ເຈົ້າຂອງຊັບ ເຂົ້າມາແນະນຳ, ພ້ອມທັງແຈ້ງໃຫ້ຜູ້ກ່ຽວຂາຍຊັບ ດັ່ງກ່າວດ້ວຍຕົນເອງ ພາຍໃນເວລາ ສາມສິບວັນ. ການແນະນຳ ແລະ ການແຈ້ງຂາຍຊັບນັ້ນ ຕ້ອງເຮັດບົດ ບັນທຶກ ແລະ ລົງລາຍເຊັນໄວ້.

ພາຍຫຼັງຕີລາຄາຊັບແລ້ວ ຊຶ່ງບໍ່ມີການຄັດຄ້ານ ຫຼື ການຄັດຄ້ານນັ້ນໄດ້ຖືກແກ້ໄຂແລ້ວ ພາຍໃນ ເວລາ ສິບວັນ ລັດຖະການ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງອອກແຈ້ງການໃຫ້ເຈົ້າຂອງຊັບ ເພື່ອໃຫ້ ຜູ້ກ່ຽວປະກາດຂາຍຊັບດ້ວຍຕົນເອງ ພາຍໃນເວລາ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບແຈ້ງການ ເປັນຕົ້ນໄປ.

ຫຼັງຈາກໝົດກຳນົດເວລາຂາຍໂດຍເຈົ້າຂອງຊັບ ຫຼື ຜູ້ຖືກປະຕິບັດຄຳຕັດສິນຂອງສານແລ້ວ ແຕ່ ບໍ່ມີບຸກຄົນໃດມາພົວພັນຊື້ຊັບດັ່ງກ່າວ ຫຼື ໃນກໍລະນີຜູ້ກ່ຽວບໍ່ສາມາດຂາຍໄດ້ຕາມກຳນົດເວລາ, ອົງການ ປະຕິບັດຄຳຕັດສິນຂອງສານ ຕ້ອງອອກແຈ້ງການປະກາດຂາຍຢ່າງກວ້າງຂວາງ ໂດຍຜ່ານພາຫະນະສື່ມວນຊົນ ເຊັ່ນ ໜັງສືພິມ, ວາລະສານ, ໂທລະພາບ, ວິທະຍຸ ແລະ ດ້ວຍວິທີອື່ນ ຕາມເງື່ອນໄຂຂອງແຕ່ລະທ້ອງຖິ່ນ ພາຍ ໃນເວລາ ສາມສິບວັນ ນັບແຕ່ວັນອອກແຈ້ງການ ເປັນຕົ້ນໄປ.

### ມາດຕາ 36 (ໃໝ່) ວິທີການຂາຍຊັບ

ການຂາຍຊັບ ສາມາດດຳເນີນໄດ້ດ້ວຍ ສອງ ວິທີ ດັ່ງນີ້:

**1. ການຂາຍຊັບ ໂດຍເຈົ້າຂອງຊັບ**

ພາຍຫຼັງອົງການປະຕິບັດຄຳຕັດສິນຂອງສານ ໄດ້ແນະນຳ ແລະ ອອກແຈ້ງການໃຫ້ຜູ້ຖືກ ປະຕິບັດຄຳຕັດສິນຂອງສານ ຫຼື ເຈົ້າຂອງຊັບ ຂາຍຊັບແລ້ວ, ມີຜູ້ມາສະເໜີຊື້ຊັບດັ່ງກ່າວ ເຈົ້າຂອງຊັບຕ້ອງແຈ້ງ ຕໍ່ອົງການປະຕິບັດຄຳຕັດສິນຂອງສານຊາບ ແລະ ເຂົ້າຮ່ວມ.

ການຂາຍຊັບໃຫ້ປະຕິບັດຕາມເງື່ອນໄຂ ຄື:

- ຊັບທີ່ຄະນະກຳມະການໄດ້ຕີລາຄາແລ້ວ ຖ້າມູນຄ່າສູງກວ່າໜີ້ສິນ ຫຼື ຄ່າເສຍຫາຍ ລວມ ທັງຄ່າທຳນຽມ ແລະ ຄ່າໃຊ້ຈ່າຍໃນການປະຕິບັດຄຳຕັດສິນຂອງສານ ສາມາດຂາຍຫຼຸດລາຄາໄດ້ ແຕ່ບໍ່ໃຫ້ຫຼຸດ ມູນຄ່າທີ່ກ່າວມານີ້, ຖ້າມູນຄ່າຊັບຫາກໜ້ອຍກວ່າ ຫຼື ບໍ່ພຽງພໍກັບຄ່າໃຊ້ຈ່າຍທີ່ກ່າວມານັ້ນ ແມ່ນບໍ່ໃຫ້ຂາຍ ຫຼຸດລາຄາທີ່ຄະນະກຳມະການໄດ້ຕີລາຄາໄວ້;
- ການຂາຍຊັບທີ່ຄະນະກຳມະການບໍ່ທັນໄດ້ຕີລາຄາ ໃນກໍລະນີ ມູນຄ່າໜ້ອຍກວ່າໜີ້ສິນ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ເຈົ້າຂອງຊັບ ແຈ້ງຕໍ່ອົງການປະຕິບັດຄຳຕັດສິນຂອງສານ ແລະ ເຈົ້າ ໜີ້ ເພື່ອຕົກລົງ.

**2. ການຂາຍຊັບ ໂດຍອົງການປະຕິບັດຄຳຕັດສິນຂອງສານ**

ພາຍຫຼັງປະກາດຂາຍຊັບຢ່າງກວ້າງຂວາງ ແລະ ມີຜູ້ມາພົວພັນຊື້ຊັບແລ້ວ ແຕ່ຜູ້ຖືກປະຕິບັດ ຄຳຕັດສິນຂອງສານ ຫຼື ເຈົ້າຂອງຊັບ ບໍ່ຍອມປະຕິບັດ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງ ຂາຍຊັບດັ່ງກ່າວ. ການຂາຍຊັບສາມາດດຳເນີນໃນວົງແຄບ ຫຼື ໂດຍປະມູນເປີດກວ້າງ.

- ການຂາຍຊັບໃນວົງແຄບ:

ອົງການປະຕິບັດຄຳຕັດສິນຂອງສານ ເປັນຜູ້ອອກໜັງສື ຊື້-ຂາຍ ຊັບໃຫ້ແກ່ຜູ້ມີຈຸດປະສົງຊື້ ໂດຍມີໃບສະເໜີຊື້ຢ່າງເປັນລາຍລັກອັກສອນ ພາຍຫຼັງໝົດເວລາປະກາດຂາຍຢ່າງກວ້າງຂວາງ.

- ການຂາຍຊັບໂດຍປະມູນເປີດກວ້າງ:

1) ການປະມູນແບບເປີດເຜີຍ

ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຕ້ອງການປະມູນລ່ວງໜ້າ ສິບວັນ ລັດຖະການ ກ່ອນວັນປະມູນ, ແຈ້ງລາຄາ, ລະບຽບ, ວັນ, ເວລາ ແລະ ສະຖານທີ່ປະມູນ, ຈາກນັ້ນ ໃຫ້ຜູ້ເຂົ້າຮ່ວມການປະມູນແຕ່ລະຄົນສະເໜີລາຄາ ຕໍ່ຄະນະກຳມະການຢ່າງເປີດເຜີຍນັບແຕ່ຜູ້ທີໜຶ່ງຮອດຜູ້ສຸດທ້າຍ, ຜູ້ເຂົ້າຮ່ວມສາມາດສະເໜີລາຄາຫຼາຍເທື່ອກໍໄດ້ ຫຼື ຜູ້ໄດ້ສະເໜີລາຄາແລ້ວ ສາມາດໃຫ້ລາຄາສູງຂຶ້ນຕື່ມອີກກໍໄດ້. ຫຼັງຈາກສິ້ນສຸດການປະມູນ ຄະນະກຳມະການ ຕ້ອງສະຫຼຸບ ແລ້ວເຮັດບົດບັນທຶກ ແລະ ລົງລາຍເຊັນໄວ້.

2) ການປະມູນແບບປິດລັບ

ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງການລ່ວງໜ້າ ສິບວັນ ລັດຖະການ ກ່ອນວັນປະມູນ ພ້ອມທັງຂາຍຊອງປະມູນ, ລາຄາຊອງປະມູນ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ. ຜູ້ມີຈຸດປະສົງຊື້ຊັບ ສາມາດຍື່ນຊອງປະມູນ ໃນວັນປະມູນ ຫຼື ກ່ອນນັ້ນກໍໄດ້.

- ຜູ້ຊະນະການປະມູນ ແມ່ນ ຜູ້ໃຫ້ລາຄາສູງສຸດ ແລະ ຕ້ອງຊຳລະເງິນຢ່າງໜ້ອຍສິບສ່ວນຮ້ອຍ ຂອງລາຄາທີ່ຕົນປະມູນໄດ້ ພາຍໃນເວລາ ສາມວັນ ລັດຖະການ ນັບແຕ່ວັນປະມູນໄດ້ ເປັນຕົ້ນໄປ, ສ່ວນທີ່ເຫຼືອຕ້ອງໃຫ້ສຳເລັດພາຍໃນເວລາ ສາມສິບວັນ. ຖ້າກາຍກຳນົດນີ້ແລ້ວ ໃຫ້ຖືວ່າເປັນການສະລະສິດ, ສ່ວນເງິນທີ່ຊຳລະກ່ອນນັ້ນຈະບໍ່ສົ່ງຄືນ, ຍົກເວັ້ນເຫດບັງເອີນ ຫຼື ເຫດສຸດວິໄສ ແລະ ຈະຖືເອົາຜູ້ເຂົ້າຮ່ວມການປະມູນທີ່ໃຫ້ລາຄາຖັດລົງມາ ເປັນຜູ້ມີບຸລິມະສິດໃນການຊື້ຊັບທີ່ປະມູນຂາຍ;

- ຜູ້ຊະນະການປະມູນ ບໍ່ມີສິດ ຂາຍຊັບໃນເວລາຊັບນັ້ນ ຍັງຢູ່ໃນຄວາມຮັບຜິດຊອບຂອງອົງການປະຕິບັດຄຳຕັດສິນຂອງສານ. ການປະມູນຈະສິ້ນສຸດ ແລະ ຊັບດັ່ງກ່າວ ຈະເປັນກຳມະສິດຂອງຜູ້ປະມູນໄດ້ກໍຕໍ່ເມື່ອ ຜູ້ຊະນະການປະມູນໄດ້ປະຕິບັດພັນທະຂອງຕົນຄົບຖ້ວນແລ້ວ.

ຄ່າໃຊ້ຈ່າຍສຳລັບຊັບທີ່ຈຳເປັນຕ້ອງໄດ້ຂຶ້ນທະບຽນໃໝ່ ກ່ຽວກັບການໂອນ, ການປ່ຽນຊື່ຜູ້ມີກຳມະສິດຄຸ້ມຄອງ ນຳໃຊ້ ແລະ ອື່ນໆ ທີ່ເປັນຄ່າໃຊ້ຈ່າຍສິ້ນເປືອງ ແລະ ຄ່າທຳນຽມຕ່າງໆ ຕໍ່ພາກສ່ວນທີ່ກ່ຽວຂ້ອງນັ້ນ ມອບໃຫ້ຜູ້ຊື້ ຫຼື ຜູ້ຊະນະການປະມູນ ເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ.

ຜູ້ຊື້ ຈະໄດ້ກຳມະສິດຕໍ່ຊັບ ກໍຕໍ່ເມື່ອໄດ້ຊຳລະເງິນຄົບຕາມຈຳນວນ ຫຼື ໄດ້ຂຶ້ນທະບຽນຊັບເປັນຕົ້ນໄປ. ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ຜູ້ຊື້ ໃນການເຂົ້າຄອບຄອງ ແລະ ຂຶ້ນທະບຽນຊັບດັ່ງກ່າວ.

ການຂາຍຊັບ ໃນກໍລະນີໃດກໍຕາມ, ຖ້າວ່າມູນຄ່າທີ່ຂາຍໄດ້ນັ້ນ ຫາກສູງກວ່າລາຄາທີ່ຄະນະກຳມະການໄດ້ຕີໄວ້ ແຕ່ກໍຍັງບໍ່ພຽງພໍກັບໜີ້ສິນ ກໍຕ້ອງມອບເງິນທັງໝົດນັ້ນ ໃຊ້ແທນໜີ້ສິນກ່ອນ, ສ່ວນໜີ້ສິນທີ່ເຫຼືອ ຈຶ່ງໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ສືບຕໍ່ໃຊ້ແທນຈົນຄົບຖ້ວນ.

## ຈ. ການມອບຊັບ

### ມາດຕາ 37 (ໃໝ່) ການມອບຊັບ

ການມອບຊັບ ແມ່ນ ການເອົາຊັບທີ່ເປັນຫຼັກຊັບຄໍ້າປະກັນ, ຊັບທີ່ເປັນກໍາມະສິດຂອງລູກໜີ້ ຫຼື ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຫຼື ຊັບທີ່ໄດ້ຮັບສິດຈາກເຈົ້າຂອງຊັບ ມອບໃຫ້ເຈົ້າໜີ້ ເພື່ອໃຊ້ແທນໜີ້ສິນ, ຄ່າເສຍຫາຍ ພາຍຫຼັງໄດ້ຕີລາຄາ ແລະ ປະກາດປະມູນຂາຍແລ້ວ ແຕ່ບໍ່ມີຜູ້ຊື້ຊັບດັ່ງກ່າວ.

### ມາດຕາ 38 (ໃໝ່) ວິທີການມອບຊັບ

ຊັບ ທີ່ໄດ້ຜ່ານການຕີລາຄາ, ປະກາດຂາຍແລ້ວ ແຕ່ຊັບດັ່ງກ່າວບໍ່ໄດ້ຂາຍໃຫ້ປະຕິບັດຕາມກໍລະນີ ດັ່ງນີ້:

1. ຊັບ ທີ່ເປັນຫຼັກຊັບຄໍ້າປະກັນ ຊຶ່ງມີມູນຄ່າເທົ່າກັນ ຫຼື ຫຼຸດໜີ້ສິນ ອົງການປະຕິບັດຄໍາຕັດສິນຂອງສານ ຕ້ອງອອກຄໍາສັ່ງມອບຊັບດັ່ງກ່າວໃຫ້ເຈົ້າໜີ້. ຖ້າຊັບນັ້ນຫາກມີມູນຄ່າສູງກວ່າໜີ້ສິນ ແຕ່ສາມາດແບ່ງໄດ້ ກໍໃຫ້ອອກຄໍາສັ່ງແບ່ງເອົາຊັບດັ່ງກ່າວ ຕາມມູນຄ່າໜີ້ສິນເພື່ອມອບໃຫ້ແກ່ເຈົ້າໜີ້. ຖ້າບໍ່ສາມາດປະຕິບັດໄດ້ຕາມກໍລະນີທີ່ກ່າວມາເທິງນັ້ນ, ໃຫ້ອົງການປະຕິບັດຄໍາຕັດສິນຂອງສານສືບຕໍ່ປະກາດຂາຍ;

2. ຊັບ ທີ່ບໍ່ເປັນຫຼັກຊັບຄໍ້າປະກັນ ແຕ່ເຈົ້າໜີ້ເຫັນດີຮັບເອົາຊັບດັ່ງກ່າວ ເພື່ອໃຊ້ແທນໜີ້ສິນ ຫຼື ຄ່າເສຍຫາຍ ອົງການປະຕິບັດຄໍາຕັດສິນຂອງສານ ຕ້ອງອອກຄໍາສັ່ງມອບຊັບດັ່ງກ່າວໃຫ້ເຈົ້າໜີ້. ຖ້າຫາກວ່າເຈົ້າໜີ້ບໍ່ເຫັນດີເອົາຊັບດັ່ງກ່າວກໍໃຫ້ສືບຕໍ່ປະກາດຂາຍຕໍ່ໄປ;

ການມອບຊັບ ໃນກໍລະນີໃດກໍຕາມ, ຕ້ອງມີການໄລ່ລຽງໜີ້ສິນກັບລາຄາຊັບທີ່ໄດ້ມອບ, ຖ້າມູນຄ່າຊັບຫາກສູງກວ່າໜີ້ສິນ ເງິນທີ່ເຫຼືອຈາກການໃຊ້ແທນນັ້ນ ກໍຕ້ອງສົ່ງຄືນໃຫ້ລູກໜີ້ ຫຼື ເຈົ້າຂອງຊັບ, ຖ້າມູນຄ່າຊັບຫາກບໍ່ພໍກັບໜີ້ສິນ ກໍໃຫ້ລູກໜີ້ສືບຕໍ່ຮັບຜິດຊອບໃຊ້ແທນຈົນຄົບຕາມຈໍານວນ.

3. ຊັບ ທີ່ສານຕັດສິນໃຫ້ລັດຄຸ້ມຄອງ ອົງການປະຕິບັດຄໍາຕັດສິນຂອງສານ ຕ້ອງຂຶ້ນບັນຊີ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອກວດກາ ແລະ ມອບຊັບດັ່ງກ່າວ ໃຫ້ຂະແໜງການທີ່ກ່ຽວຂ້ອງຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 39 (ໃໝ່) ການສົ່ງເອກະສານທີ່ກ່ຽວຂ້ອງກັບຊັບ

ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຕ້ອງສົ່ງເອກະສານທີ່ກ່ຽວຂ້ອງກັບຊັບ ເປັນຕົ້ນ ໃບທະບຽນ, ໃບຕາດິນ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມຄໍາຕັດສິນຂອງສານ ພາຍໃນເວລາ ສິບຫ້າວັນ.

ໃນກໍລະນີຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຫາກບໍ່ສົ່ງເອກະສານດັ່ງກ່າວ, ອົງການປະຕິບັດຄໍາຕັດສິນຂອງສານ ຕ້ອງອອກຄໍາສັ່ງໃຫ້ສົ່ງເອກະສານນັ້ນ. ແຕ່ຖ້າຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຫາກຍັງບໍ່ປະຕິບັດຕາມຄໍາສັ່ງ ກໍໃຫ້ອົງການປະຕິບັດຄໍາຕັດສິນຂອງສານ ສະເໜີຕໍ່ອົງການຈັດຕັ້ງທີ່ມີສິດອໍານາດກ່ຽວຂ້ອງ ລົບລ້າງ ແລ້ວອອກເອກະສານໃໝ່ ຕາມແຕ່ລະກໍລະນີ.

### ມາດຕາ 40 (ໃໝ່) ການມອບເງິນ ທີ່ອົງການປະຕິບັດຄໍາຕັດສິນຂອງສານຮັກສາ

ໃນກໍລະນີ ອົງການປະຕິບັດຄໍາຕັດສິນຂອງສານ ໄດ້ຮັບເງິນ ຫຼື ຮັກສາເງິນ ຂອງຜູ້ຖືກປະຕິບັດຄໍາຕັດສິນຂອງສານ ເພື່ອໃຊ້ແທນໃຫ້ແກ່ເຈົ້າໜີ້ ກໍໃຫ້ມອບແກ່ເຈົ້າໜີ້ຕາມຄໍາຕັດສິນຂອງສານ. ຖ້າເຈົ້າໜີ້ຫາກຍັງມີພັນທະປະຕິບັດຄໍາຕັດສິນຄະດີອື່ນ ຊຶ່ງຜູ້ກ່ຽວຍັງບໍ່ທັນໄດ້ປະຕິບັດ ໃຫ້ອົງການປະຕິບັດຄໍາຕັດສິນຂອງສານ ອອກຄໍາສັ່ງມອບເງິນດັ່ງກ່າວ ໃຫ້ເຈົ້າໜີ້ຂອງຜູ້ກ່ຽວຕາມຄໍາຕັດສິນຂອງສານ.

ພາຍຫຼັງໄດ້ຮັບຄໍາສັ່ງແລ້ວ ພະນັກງານປະຕິບັດຄໍາຕັດສິນຂອງສານ ທີ່ຮັບຜິດຊອບຄະດີ ຕ້ອງແຈ້ງໃຫ້ເຈົ້າໜີ້ ທີ່ມີພັນທະປະຕິບັດຄໍາຕັດສິນຄະດີອື່ນນັ້ນຊາບ ແລະ ເຂົ້າຮ່ວມໃນການປະຕິບັດ, ຖ້າຜູ້ກ່ຽວຫາກບໍ່ເຂົ້າຮ່ວມໂດຍບໍ່ມີເຫດຜົນ ອົງການປະຕິບັດຄໍາຕັດສິນຂອງສານ ຕ້ອງມອບເງິນໃຫ້ເຈົ້າໜີ້ຂອງຜູ້ກ່ຽວ.

**ມາດຕາ 41 (ໃໝ່) ການປະຕິບັດແທນ**

ໃນກໍລະນີ ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຫາກຍົກຍ້າຍໄປຢູ່ບ່ອນອື່ນກ່ອນການປະຕິບັດຄໍາຕັດສິນຂອງສານ ຫຼື ການປະຕິບັດຍັງບໍ່ທັນສິ້ນສຸດນັ້ນ, ອົງການປະຕິບັດຄໍາຕັດສິນຂອງສານທີ່ກ່ຽວຂ້ອງ ສາມາດໂອນການປະຕິບັດຄໍາຕັດສິນດັ່ງກ່າວ ໄປໃຫ້ອົງການປະຕິບັດຄໍາຕັດສິນຂອງສານ ບ່ອນຜູ້ຖືກປະຕິບັດຄໍາຕັດສິນຂອງສານຍົກຍ້າຍໄປຢູ່ນັ້ນ ເປັນຜູ້ປະຕິບັດແທນ.

ຖ້າວ່າຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຫາກມີຊັບຢູ່ຫຼາຍເມືອງ ຫຼື ຢູ່ຫຼາຍແຂວງ ອົງການປະຕິບັດຄໍາຕັດສິນຂອງສານ ທີ່ຮັບຜິດຊອບປະຕິບັດຄໍາຕັດສິນດັ່ງກ່າວ ສາມາດສະເໜີໃຫ້ອົງການປະຕິບັດຄໍາຕັດສິນຂອງສານ ບ່ອນມີຊັບຢູ່ນັ້ນປະຕິບັດແທນຕົນກໍໄດ້ ຈົນກວ່າຈະຄົບຈໍານວນໜີ້ສິນຕາມຄໍາຕັດສິນຂອງສານ.

**ມາດຕາ 42 (ປັບປຸງ) ຄ່າທໍານຽມສານ ແລະ ຄ່າໃຊ້ຈ່າຍ ໃນການປະຕິບັດຄໍາຕັດສິນຂອງສານ**

ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຕ້ອງຮັບຜິດຊອບຈ່າຍຄ່າທໍານຽມສານ ຕາມທີ່ໄດ້ກໍານົດໄວ້ໃນຄໍາຕັດສິນຂອງສານ ໃນເວລາປະຕິບັດ ເພື່ອມອບເຂົ້າງົບປະມານຂອງລັດ. ໃນກໍລະນີຜູ້ກ່ຽວບໍ່ຍິນຍອມຈ່າຍ ໃຫ້ອົງການປະຕິບັດຄໍາຕັດສິນຂອງສານ ນໍາໃຊ້ມາດຕະການໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 53 ຂອງກົດໝາຍສະບັບນີ້.

ຄ່າໃຊ້ຈ່າຍໃນການປະຕິບັດຄໍາຕັດສິນຂອງສານ ແມ່ນ ຈໍານວນເງິນທີ່ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຕ້ອງໄດ້ຈ່າຍ ຊຶ່ງປະກອບດ້ວຍ ຄ່າໃຊ້ຈ່າຍໃຫ້ແກ່ຜູ້ເຂົ້າຮ່ວມ, ການປະກາດຂາຍຊັບ, ພາຫະນະ, ຍົກຍ້າຍ ແລະ ຄ່າເອກະສານ. ໃນກໍລະນີຜູ້ກ່ຽວຫາກບໍ່ຍິນຍອມຈ່າຍ ໃຫ້ຜູ້ຊະນະຄະດີຈ່າຍກ່ອນ, ອົງການປະຕິບັດຄໍາຕັດສິນຂອງສານ ຕ້ອງນໍາໃຊ້ມາດຕະການໃດໜຶ່ງຕາມທີ່ໄດ້ກໍານົດໄວ້ໃນມາດຕາ 53 ຂອງກົດໝາຍສະບັບນີ້ ເພື່ອຄືດໄລ່ທົດແທນຄືນ. ຖ້າຜູ້ຖືກປະຕິບັດຄໍາຕັດສິນຂອງສານຫາກບໍ່ມີເງື່ອນໄຂປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 43 ຂອງກົດໝາຍສະບັບນີ້ ໃຫ້ເປັນຄວາມຮັບຜິດຊອບຂອງຜູ້ຊະນະຄະດີ.

## ໝວດທີ 4

## ຄໍາຕັດສິນຂອງສານ ທີ່ບໍ່ມີເງື່ອນໄຂປະຕິບັດ ແລະ ການຮ້ອງຂໍໃຫ້ປະຕິບັດ

**ມາດຕາ 43 (ໃໝ່) ຄໍາຕັດສິນຂອງສານ ທີ່ບໍ່ມີເງື່ອນໄຂປະຕິບັດ**

ຄໍາຕັດສິນຂອງສານ ທີ່ບໍ່ມີເງື່ອນໄຂປະຕິບັດ ມີ ດັ່ງນີ້:

1. ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ບໍ່ມີຊັບສິນ ຫຼື ບໍ່ມີລາຍຮັບ, ມີລາຍຮັບຕໍ່າ ພຽງແຕ່ພໍຮັບປະກັນການດໍາລົງຊີວິດຂອງຕົນເທົ່ານັ້ນ;

2. ຜູ້ຖືກປະຕິບັດຄໍາຕັດສິນຂອງສານກັບຄືນປະເທດ ໂດຍບໍ່ມີຊັບສິນຢູ່ ສປປ ລາວ ແລະ ບໍ່ແມ່ນປະເທດທີ່ມີສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

ເງື່ອນໄຂທີ່ບໍ່ສາມາດປະຕິບັດໄດ້ ຕ້ອງມີການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ.

ຜ່ານການປະຕິບັດ ຫາກເຫັນວ່າຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ມີເງື່ອນໄຂປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ແລະ ຂໍ້ 2 ຂອງມາດຕານີ້, ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ແລ້ວແຈ້ງໃຫ້ຄູ່ຄວາມ, ອົງການໄອຍະການປະຊາຊົນຂັ້ນດຽວກັນຊາບ ພາຍໃນເວລາ ເຈັດວັນ ລັດຖະການ ນັບແຕ່ວັນອອກຄຳສັ່ງ ເປັນຕົ້ນໄປ.

ຄູ່ຄວາມ ມີສິດຮ້ອງຂໍໃຫ້ປະຕິບັດຄືນໃໝ່ ຫາກວ່າຜູ້ຖືກປະຕິບັດຄຳຕັດສິນຂອງສານ ມີເງື່ອນໄຂປະຕິບັດ.

**ມາດຕາ 44 (ໃໝ່) ການຮ້ອງຂໍ ໃຫ້ສືບຕໍ່ປະຕິບັດຄຳຕັດສິນຂອງສານ**

ອົງການປະຕິບັດຄຳຕັດສິນຂອງສານ ຈະນຳເອົາຄຳຕັດສິນຂອງສານ ທີ່ບໍ່ມີເງື່ອນໄຂປະຕິບັດ ແລະ ໄດ້ອອກຄຳສັ່ງໂຈະໄວ້ນັ້ນມາປະຕິບັດ ກໍຕໍ່ເມື່ອມີຄຳຮ້ອງຂໍ ຂອງຄູ່ຄວາມຝ່າຍໃດໜຶ່ງ ຫຼື ຜູ້ໄດ້ຮັບມອບສິດ, ຍົກເວັ້ນການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຜົນປະໂຫຍດຂອງລັດ, ເດັກ ແລະ ການລົ້ມລະລາຍຂອງວິສາຫະກິດ.

ຄຳຮ້ອງຂໍໃຫ້ປະຕິບັດຄຳຕັດສິນຂອງສານ ສາມາດຍື່ນຕໍ່ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ຫຼື ຜ່ານທາງໄປສະນີ ຫຼື ເຂົ້າມາສະເໜີຕໍ່ອົງການປະຕິບັດຄຳຕັດສິນຂອງສານໂດຍກົງ.

**ມາດຕາ 45 (ໃໝ່) ເອກະສານປະກອບຄຳຮ້ອງຂໍ**

ເອກະສານປະກອບຄຳຮ້ອງຂໍ ໃຫ້ປະຕິບັດຄຳຕັດສິນຂອງສານ ມີ ດັ່ງນີ້:

1. ຄຳຮ້ອງຕາມແບບພິມທີ່ກຳນົດ;
2. ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
3. ຂໍ້ມູນຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ລວມທັງຊັບສິນຂອງຜູ້ກ່ຽວ;
4. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 46 (ໃໝ່) ການກວດກາຄຳຮ້ອງຂໍ**

ພາຍຫຼັງໄດ້ຮັບຄຳຮ້ອງຂໍແລ້ວ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງກວດກາເອກະສານປະກອບ ແລ້ວຈົດເຂົ້າປຶ້ມບັນທຶກ, ອອກໜັງສືຮັບໃຫ້ແກ່ຜູ້ຍື່ນຄຳຮ້ອງ ແລະ ມອບໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ຜູ້ໃດໜຶ່ງຮັບຜິດຊອບກວດກາເນື້ອໃນຄຳຮ້ອງຂໍ, ເອກະສານປະກອບ, ຂໍ້ມູນຄຳຕັດສິນຂອງສານໃນຖານຂໍ້ມູນ ພາຍໃນເວລາ ສາມວັນ ລັດຖະການ. ຖ້າເຫັນວ່າຄຳຮ້ອງຂໍ ແລະ ເອກະສານປະກອບນັ້ນ ຫາກຖືກຕ້ອງ ແລະ ຄົບຖ້ວນແລ້ວ ໃຫ້ລາຍງານຫົວໜ້າ ກົມ, ກອງ ແລະ ຫ້ອງປະຕິບັດຄຳຕັດສິນຂອງສານ ທີ່ກ່ຽວຂ້ອງ ເພື່ອມອບໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ຄົ້ນຄວ້າ ແລະ ປະຕິບັດ.

ໃນກໍລະນີ ຄຳຮ້ອງຂໍ ແລະ ເອກະສານປະກອບນັ້ນ ຫາກບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ກໍໃຫ້ແນະນຳຜູ້ຮ້ອງຂໍ ເພື່ອປັບປຸງ ແກ້ໄຂ.

**ມາດຕາ 47 (ໃໝ່) ຄຳຮ້ອງຂໍ ທີ່ບໍ່ຮັບພິຈາລະນາ**

ອົງການປະຕິບັດຄຳຕັດສິນຂອງສານ ຈະບໍ່ຮັບຄຳຮ້ອງຂໍມາພິຈາລະນາ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ຮ້ອງຂໍ ບໍ່ກ່ຽວຂ້ອງກັບຄະດີ ຫຼື ບໍ່ໄດ້ຮັບມອບສິດໃຫ້ຮ້ອງຂໍ;
2. ການຮ້ອງຂໍ ບໍ່ກ່ຽວຂ້ອງກັບຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
3. ອົງການປະຕິບັດຄຳຕັດສິນຂອງສານ ທີ່ຮັບຄຳຮ້ອງຂໍ ບໍ່ມີສິດອຳນາດໃນການປະຕິບັດຄຳຕັດສິນຂອງສານນັ້ນ.

ໃນກໍລະນີ ບໍ່ຮັບຄຳຮ້ອງຂໍມາພິຈາລະນານັ້ນ ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ຕ້ອງໄດ້ແຈ້ງເຫດຜົນຢ່າງເປັນລາຍລັກອັກສອນ ພ້ອມທັງແນະນຳຜູ້ຮ້ອງຂໍ.

## ໝວດທີ 5
## ການສິ້ນສຸດການປະຕິບັດຄຳຕັດສິນຂອງສານ

### ມາດຕາ 48 (ປັບປຸງ) ການສິ້ນສຸດການປະຕິບັດຄຳຕັດສິນຂອງສານ

ການປະຕິບັດຄຳຕັດສິນຂອງສານ ຈະສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ຄຳຕັດສິນຂອງສານ ໄດ້ຮັບການປະຕິບັດຢ່າງຄົບຖ້ວນແລ້ວ;

2. ຄຳຕັດສິນຂອງສານ ໄດ້ຮັບການປະຕິບັດຄ່າທຳນຽມສານສຳເລັດ ໃນກໍລະນີປະຕິບັດດ້ວຍຄວາມສະໝັກໃຈ;

3. ເຈົ້າໜີ້ ໄດ້ສະລະສິດ ຫຼື ເຈົ້າໜີ້ໄດ້ຮັບໝາຍຮຽກສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາສະເໜີຕໍ່ພະນັກງານປະຕິບັດຄຳຕັດສິນຂອງສານ ໂດຍບໍ່ມີເຫດຜົນພຽງພໍ ກໍໃຫ້ຖືວ່າເປັນການສະລະສິດເຊັ່ນດຽວກັນ;

ໃນກໍລະນີລູກໜີ້ໄດ້ປະຕິບັດພັນທະແລ້ວສ່ວນໃດສ່ວນໜຶ່ງ ແລະ ເຈົ້າໜີ້ໄດ້ສະລະສິດ ຫຼື ໝົດສິດຕາມກົດໝາຍ, ຊັບທີ່ຍັງເຫຼືອຈາກການປະຕິບັດນັ້ນ ຈະຖືກສົ່ງຄືນໃຫ້ລູກໜີ້, ຖ້າລູກໜີ້ຫາກສະລະສິດກໍໃຫ້ເປັນຂອງລັດ;

4. ຄູ່ຄວາມ ມີການຕົກລົງເຫັນດີ ສະລະສິດບໍ່ປະຕິບັດຕາມຄຳຕັດສິນຂອງສານ ຊຶ່ງການຕົກລົງນັ້ນບໍ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;

5. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເສຍຊີວິດໂດຍບໍ່ມີຊັບ, ບໍ່ມີສິດໃຫ້ຜູ້ອື່ນສືບທອດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

6. ເຈົ້າໜີ້ ໄດ້ເສຍຊີວິດ ຊຶ່ງສິດ ແລະ ຜົນປະໂຫຍດຂອງບຸກຄົນດັ່ງກ່າວ ທີ່ໄດ້ຮັບຕາມຄຳຕັດສິນຂອງສານ ບໍ່ສາມາດມອບໃຫ້ຜູ້ສືບທອດ ຫຼື ບໍ່ມີຜູ້ສືບທອດມູນມໍຣະດົກ;

7. ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ໄດ້ຖືກປ່ຽນແປງ, ຍົກເລີກ ຫຼື ລົບລ້າງ ໂດຍບໍ່ໃຫ້ຄູ່ຄວາມມີພັນທະປະຕິບັດ;

8. ຄຳຕັດສິນ ໃຫ້ຍົກເລີກພັນທະປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຮິບ.

### ມາດຕາ 49 (ໃໝ່) ຄຳສັ່ງປິດການປະຕິບັດຄຳຕັດສິນຂອງສານ

ເມື່ອມີກໍລະນີ ພາໃຫ້ການປະຕິບັດຄຳຕັດສິນຂອງສານສິ້ນສຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງກົດໝາຍສະບັບນີ້, ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງສະຫຼຸບ, ລາຍງານ ໃຫ້ຫົວໜ້າ ກົມ, ກອງ, ຫ້ອງປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ເພື່ອອອກຄຳສັ່ງປິດການປະຕິບັດຄຳຕັດສິນຂອງສານ.

### ມາດຕາ 50 (ໃໝ່) ການແຈ້ງຄຳສັ່ງປິດການປະຕິບັດຄຳຕັດສິນຂອງສານ

ພາຍຫຼັງອອກຄຳສັ່ງປິດການປະຕິບັດຄຳຕັດສິນຂອງສານແລ້ວ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງສົ່ງຄຳສັ່ງດັ່ງກ່າວໃຫ້ຄູ່ຄວາມ, ອົງການໄອຍະການປະຊາຊົນ, ສະພາປະຊາຊົນຂັ້ນແຂວງ ແລະ/ຫຼື ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຊາບ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນອອກຄຳສັ່ງເປັນຕົ້ນໄປ.

**ມາດຕາ 51 (ໃໝ່) ການຂໍລຶບລ້າງຄຳສັ່ງປິດການປະຕິບັດຄຳຕັດສິນຂອງສານ**

ໃນກໍລະນີ ຄູ່ຄວາມ, ບຸກຄົນອື່ນທີ່ກ່ຽວຂ້ອງ ມີຂໍ້ມູນຫຼັກຖານຢັ້ງຢືນວ່າການປະຕິບັດບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ສອດຄ່ອງກັບຄຳຕັດສິນຂອງສານ ກໍມີສິດຮ້ອງຂໍ, ສະເໜີຕໍ່ອົງການປະຕິບັດຄຳຕັດສິນຂອງສານຂັ້ນເທິງຖັດໄປ ເພື່ອພິຈາລະນາລຶບລ້າງຄຳສັ່ງປິດການປະຕິບັດຄຳຕັດສິນຂອງສານ ພາຍໃນເວລາສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສັ່ງ ເປັນຕົ້ນໄປ, ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງຕ້ອງພິຈາລະນາ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍ, ຄຳສະເໜີ ເປັນຕົ້ນໄປ.

**ມາດຕາ 52 (ປັບປຸງ) ການຮັກສາສຳນວນການປະຕິບັດຄຳຕັດສິນຂອງສານ**

ສຳນວນການປະຕິບັດຄຳຕັດສິນຂອງສານ ທີ່ໄດ້ປະຕິບັດຄຳຕັດສິນຂອງສານສິ້ນສຸດແລ້ວໃຫ້ຮັກສາໄວ້ ຊາວປີ ນັບແຕ່ວັນອອກຄຳສັ່ງປິດການປະຕິບັດຄຳຕັດສິນຂອງສານ ເປັນຕົ້ນໄປ, ຫຼັງຈາກນັ້ນຈຶ່ງທຳລາຍຖິ້ມ.

## ໝວດທີ 6
## ມາດຕະການ ໃນການປະຕິບັດຄຳຕັດສິນຂອງສານ

**ມາດຕາ 53 (ໃໝ່) ມາດຕະການ ໃນການປະຕິບັດຄຳຕັດສິນຂອງສານ**

ການປະຕິບັດຄຳຕັດສິນຂອງສານມີມາດຕະການ ດັ່ງນີ້:

1. ການພາຕົວ;
2. ການຍຶດຊັບ;
3. ການອາຍັດຊັບ;
4. ການຫັກເງິນ ໃນບັນຊີຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;
5. ການຫັກລາຍຮັບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;
6. ການຫັກລາຍໄດ້ຈາກການດຳເນີນທຸລະກິດ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;
7. ການມອບເງິນ ທີ່ບຸກຄົນອື່ນຮັກສາ ຫຼື ມີໜີ້ຕ້ອງສົ່ງ;
8. ມາດຕະການຮີບດ່ວນ;
9. ມາດຕະການອື່ນ.

**ມາດຕາ 54 (ໃໝ່) ການພາຕົວ**

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກໄດ້ຮັບໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາຕາມໝາຍຮຽກ ໂດຍບໍ່ມີເຫດຜົນພຽງພໍ ຫຼື ໄດ້ຮັບແຈ້ງການໃຫ້ຢູ່ເຮືອນ ຫຼື ສະຖານທີ່ໃດໜຶ່ງ ເພື່ອເຂົ້າຮ່ວມການປະຕິບັດຄຳຕັດສິນ, ແຕ່ຜູ້ກ່ຽວບໍ່ປະຕິບັດໂດຍບໍ່ມີເຫດຜົນພຽງພໍນັ້ນ ອົງການປະຕິບັດຄຳຕັດສິນຂອງສານ ຈະອອກຄຳສັ່ງໃຫ້ພາຕົວຜູ້ກ່ຽວ ເຂົ້າມາຮັບຊາບ ຫຼື ເຂົ້າມາສະຖານໃດໜຶ່ງ ເພື່ອປະຕິບັດຄຳຕັດສິນຂອງສານ ແຕ່ບໍ່ໃຫ້ກັກຕົວ ຫຼື ກັກຂັງ ເພື່ອເລັ່ງໜີ້.

ການພາຕົວ ໃຫ້ປະຕິບັດໄດ້ແຕ່ເວລາ ຫົກໂມງ ຫາ ສິບແປດໂມງ, ເວັ້ນເສຍແຕ່ ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຈະເອົາຕົວຫຼົບໜີ ຫຼື ບໍ່ຮູ້ບ່ອນຢູ່ທີ່ແນ່ນອນ.

ອົງການປະຕິບັດຄຳຕັດສິນຂອງສານ ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດ ເພື່ອພາຕົວຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕາມຄຳສັ່ງພາຕົວ. ກ່ອນການພາຕົວ ເຈົ້າໜ້າທີ່ຕ້ອງອ່ານຄຳສັ່ງ ໃຫ້ຜູ້ຖືກພາຕົວຊາບ.

**ມາດຕາ 55 (ໃໝ່) ການຍຶດຊັບ**

ຜ່ານການກວດກາ ແລະ ຂຶ້ນບັນຊີຊັບສິນຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ຊຶ່ງໄດ້ຮູ້ແຈ້ງກ່ຽວກັບປະເພດ, ຈຳນວນ, ສະຖານທີ່ເກັບມ້ຽນວັດຖຸສິ່ງຂອງ, ສິນຄ້າ ຫຼື ປະເພດສັງຫາລິມະຊັບ ທີ່ເປັນປະໂຫຍດໃຫ້ແກ່ການປະຕິບັດຄຳຕັດສິນຂອງສານ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຍຶດຊັບດັ່ງກ່າວ ມາຮັກສາໄວ້ໃນສະຖານທີ່ເໝາະສົມ.

ພະນັກງານປະຕິບັດຄຳຕັດສິນຂອງສານ ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດການຍຶດຊັບ ພາຍໃນເວລາ ເຈັດວັນ ລັດຖະການ ນັບແຕ່ວັນອອກຄຳສັ່ງຍຶດຊັບ ເປັນຕົ້ນໄປ.

ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງເຮັດບົດບັນທຶກລະອຽດກ່ຽວກັບຊັບທີ່ໄດ້ຍຶດທຸກຄັ້ງ.

**ມາດຕາ 56 (ໃໝ່) ການອາຍັດຊັບ**

ຊັບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ກວດພົບນັ້ນ ໃນກໍລະນີ ເປັນບັນຊີເງິນຝາກ, ອະສັງຫາລິມະຊັບ ຊຶ່ງມີຂໍ້ມູນຈະແຈ້ງແລ້ວ, ທີ່ເປັນປະໂຫຍດໃຫ້ແກ່ການປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງອາຍັດຊັບດັ່ງກ່າວໄວ້ ພາຍໃນເວລາ ຫ້າວັນ ລັດຖະການແລ້ວແຈ້ງໃຫ້ຄູ່ຄວາມ, ອົງການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ.

ໃນເວລາລົງແຈ້ງຄຳສັ່ງອາຍັດຊັບກັບທີ່ນັ້ນ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງເຮັດບົດບັນທຶກໄວ້ເພື່ອເປັນຫຼັກຖານ.

**ມາດຕາ 57 (ປັບປຸງ) ຊັບທີ່ຫ້າມ ຍຶດ ຫຼື ອາຍັດ**

ຊັບທີ່ບໍ່ອະນຸຍາດໃຫ້ ຍຶດ ຫຼື ອາຍັດ ມາໃຊ້ແທນໜີ້ສິນ ມີ ດັ່ງນີ້:

1. ສິ່ງສັກກາລະບູຊາ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີມູນຄ່າບໍ່ເກີນ ໜຶ່ງລ້ານກີບຕໍ່ຫົວໜ່ວຍ;
2. ອາຫານສຳລັບກິນປະຈຳວັນ ແລະ ຢາປົວພະຍາດຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;
3. ວັດຖຸສິ່ງຂອງ ທີ່ໃຊ້ເປັນປະຈຳຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ແລະ ຂອງບຸກຄົນຊຶ່ງຢູ່ພາຍໃຕ້ການເບິ່ງແຍງລ້ຽງດູຂອງຜູ້ກ່ຽວ ເຊັ່ນ ເຄື່ອງນຸ່ງຫົ່ມ, ເຄື່ອງນອນ, ເຄື່ອງຄົວກິນ ແລະ ເຄື່ອງຫຼິ້ນເດັກນ້ອຍ ທີ່ມີມູນຄ່າບໍ່ເກີນ ຫ້າລ້ານກີບ ຕໍ່ຄົນ;
4. ວັດຖຸສິ່ງຂອງທີ່ຈຳເປັນ ສຳລັບການປະກອບອາຊີບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີມູນຄ່າບໍ່ເກີນ ຫ້າລ້ານກີບ.

**ມາດຕາ 58 (ໃໝ່) ການຫັກເງິນໃນບັນຊີ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ**

ໃນກໍລະນີ ມີຄຳສັ່ງອາຍັດບັນຊີເງິນຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ແຕ່ຜູ້ກ່ຽວຍັງບໍ່ປະຕິບັດ ຫຼື ປະຕິບັດບໍ່ຄົບຖ້ວນ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຫັກເງິນໃນບັນຊີດັ່ງກ່າວໃນຈຳນວນຍັງຄ້າງປະຕິບັດ ເພື່ອປະຕິບັດຄຳຕັດສິນຂອງສານ.

ອົງການຈັດຕັ້ງ ທີ່ຄຸ້ມຄອງບັນຊີເງິນທີ່ກ່ຽວຂ້ອງ ຕ້ອງຫັກ ແລະ ໂອນເງິນ ຕາມຈຳນວນທີ່ກຳນົດໄວ້ໃນຄຳສັ່ງດັ່ງກ່າວ ເຂົ້າບັນຊີຂອງອົງການປະຕິບັດຄຳຕັດສິນຂອງສານ ຫຼື ບັນຊີຂອງເຈົ້າໜີ້ ຕາມຄຳສັ່ງນັ້ນ ພາຍໃນເວລາ ເຈັດວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສັ່ງ ເປັນຕົ້ນໄປ.

**ມາດຕາ 59 (ໃໝ່) ການຫັກລາຍຮັບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ**

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ມີຊັບທີ່ຈະນຳມາປະຕິບັດ ແຕ່ຜູ້ກ່ຽວມີລາຍຮັບເປັນຕົ້ນ ເງິນເດືອນ, ຄ່າແຮງງານ, ເງິນອຸດໜູນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຫັກເອົາລາຍຮັບດັ່ງກ່າວ ເພື່ອປະຕິບັດຄຳຕັດສິນຂອງສານ.

ການຫັກລາຍຮັບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ສູງສຸດບໍ່ໃຫ້ເກີນ ສາມສິບ ສ່ວນຮ້ອຍ ຂອງລາຍຮັບທັງໝົດໃນແຕ່ລະເດືອນ, ຍົກເວັ້ນຄູ່ຄວາມໄດ້ຕົກລົງກັນ ຫຼື ຕາມຄຳຕັດສິນຂອງສານ.

ສຳລັບ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີລາຍໄດ້ບໍ່ປົກກະຕິ ໃຫ້ຫັກໂດຍອີງໃສ່ລາຍໄດ້ຕົວຈິງ ແຕ່ຕ້ອງຮັບປະກັນເງື່ອນໄຂການດຳລົງຊີວິດຂອງຜູ້ກ່ຽວ ແລະ ບຸກຄົນທີ່ຢູ່ໃນຄວາມຮັບຜິດຊອບລ້ຽງດູຂອງຜູ້ກ່ຽວ.

ການຈັດຕັ້ງ, ນິຕິບຸກຄົນ ຫຼື ບຸກຄົນ ບ່ອນທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ມີລາຍຮັບຕ້ອງປະຕິບັດຕາມຄຳສັ່ງດັ່ງກ່າວ ແລະ ມອບເງິນທີ່ຫັກນັ້ນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ.

**ມາດຕາ 60 (ໃໝ່) ການຫັກລາຍໄດ້ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ**

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກມີລາຍໄດ້ຈາກການດຳເນີນທຸລະກິດ ຫຼື ຈາກແຫຼ່ງລາຍໄດ້ອື່ນ ແຕ່ບໍ່ຍອມປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຫັກລາຍໄດ້ດັ່ງກ່າວ ສູງສຸດບໍ່ໃຫ້ເກີນ ຫົກສິບສ່ວນຮ້ອຍ ຂອງລາຍໄດ້ສຸດທິ.

ການຈັດຕັ້ງ, ນິຕິບຸກຄົນ ຫຼື ບຸກຄົນ ທີ່ມີພັນທະມອບລາຍໄດ້ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕ້ອງປະຕິບັດຕາມຄຳສັ່ງດັ່ງກ່າວ ແລະ ມອບ ຫຼື ໂອນເງິນນັ້ນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ.

**ມາດຕາ 61 (ໃໝ່) ການມອບເງິນ ທີ່ບຸກຄົນອື່ນຮັກສາ ຫຼື ມີໜີ້ຕ້ອງສົ່ງ**

ໃນກໍລະນີ ມີຫຼັກຖານຢ່າງຈະແຈ້ງຢັ້ງຢືນວ່າບຸກຄົນອື່ນ ໄດ້ຮັກສາເງິນ ຫຼື ມີໜີ້ຕ້ອງສົ່ງ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງໃຫ້ບຸກຄົນດັ່ງກ່າວມອບເງິນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ.

ຜູ້ຮັກສາເງິນ ຫຼື ມີໜີ້ຕ້ອງສົ່ງ ຕ້ອງມອບເງິນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ຕາມຈຳນວນ ແລະ ກຳນົດເວລາທີ່ໄດ້ກຳນົດໄວ້ໃນຄຳສັ່ງດັ່ງກ່າວ.

ກ່ອນການມອບເງິນໃຫ້ເຈົ້າໜີ້, ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານຊາບ ແລະ ເຂົ້າຮ່ວມໃນການປະຕິບັດ, ຖ້າຜູ້ກ່ຽວຫາກບໍ່ເຂົ້າຮ່ວມໂດຍບໍ່ມີເຫດຜົນ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງມອບເງິນໃຫ້ເຈົ້າໜີ້ຂອງຜູ້ກ່ຽວ.

**ມາດຕາ 62 (ໃໝ່) ມາດຕະການຮີບດ່ວນ**

ອົງການປະຕິບັດຄຳຕັດສິນຂອງສານ ມີສິດຊື້ຂາດ ຊັບສິ່ງຂອງ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ເນື່ອງຈາກວ່າຊັບດັ່ງກ່າວ ຈະມີການປ່ຽນຮູບ ຫຼື ເສື່ອມເສຍຄຸນນະພາບ ກ່ອນການປະຕິບັດຄຳຕັດສິນຂອງສານ.

**ມາດຕາ 63 (ປັບປຸງ) ຜົນບັງຄັບປະຕິບັດຄຳສັ່ງ ຂອງອົງການປະຕິບັດຄຳຕັດສິນຂອງສານ**

ຄຳສັ່ງຂອງອົງການປະຕິບັດຄຳຕັດສິນຂອງສານ ທີ່ອອກຢ່າງຖືກຕ້ອງ ໃນຂອບເຂດ ສິດ ແລະ ໜ້າທີ່ຂອງຕົນ ເພື່ອປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ໃຫ້ຖືຄືກັນກັບຄຳສັ່ງຂອງສານ ແລະ ມີຜົນບັງຄັບປະຕິບັດ ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້.

ການຫຼີກລ່ຽງ ບໍ່ປະຕິບັດຕາມຄຳສັ່ງດັ່ງກ່າວ ໂດຍເຈດຕະນາ ຫຼື ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານປະຕິບັດຄຳຕັດສິນຂອງສານ ຈະຖືກດຳເນີນຄະດີຕາມກົດໝາຍ.

ຄູ່ຄວາມ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ ທີ່ບໍ່ພໍໃຈຕໍ່ຄຳສັ່ງຂອງອົງການປະຕິບັດຄຳຕັດສິນຂອງສານ ມີສິດຮ້ອງຂໍໃຫ້ອົງການປະຕິບັດຄຳຕັດສິນຂອງສານຂັ້ນເທິງຖັດໄປ ພິຈາລະນາ ພາຍໃນເວລາ ສິບວັນລັດຖະການ ນັບແຕ່ວັນໄດ້ຮັບຊາບຄຳສັ່ງ ເປັນຕົ້ນໄປ.

## ພາກທີ IV
## ການປະຕິບັດຄຳຕັດສິນຄະດີອາຍາ

**ມາດຕາ 64 (ໃໝ່) ການປະຕິບັດຄຳຕັດສິນຄະດີອາຍາ**

ການປະຕິບັດຄຳຕັດສິນຄະດີອາຍາ ແມ່ນ ການປະຕິບັດໂທດຕັດອິດສະລະພາບ, ໂທດປັບໃໝ, ໂທດຮິບຊັບ, ໂທດຮິບວັດຖຸສິ່ງຂອງ, ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ການໃຊ້ແທນຄ່າເສຍຫາຍທາງແພ່ງ.

ການປະຕິບັດໂທດຕັດອິດສະລະພາບ ແມ່ນ ຄວາມຮັບຜິດຊອບຂອງຂະແໜງການປ້ອງກັນຄວາມສະຫງົບ. ຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ໃນການປະຕິບັດຄຳຕັດສິນຄະດີອາຍາກ່ຽວກັບໂທດຕັດອິດສະລະພາບ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ການປະຕິບັດ ໂທດປັບໃໝ, ໂທດຮິບຊັບ, ໂທດຮິບວັດຖຸສິ່ງຂອງ, ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ການໃຊ້ແທນຄ່າເສຍຫາຍທາງແພ່ງ ແມ່ນ ຄວາມຮັບຜິດຊອບຂອງອົງການປະຕິບັດຄຳຕັດສິນຂອງສານ.

**ມາດຕາ 65 (ປັບປຸງ) ການປະຕິບັດໂທດປັບໃໝ**

ການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບໂທດປັບໃໝ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຫາ ມາດຕາ 63 ຂອງກົດໝາຍສະບັບນີ້.

ສຳລັບ ຜູ້ຍັງປະຕິບັດໂທດ, ຜູ້ໄດ້ຮັບການອະໄພຍະໂທດ, ຜູ້ພົ້ນໂທດຕັດອິດສະລະພາບແລ້ວແຕ່ປະຕິບັດໂທດປັບໃໝຍັງບໍ່ທັນຄົບຖ້ວນນັ້ນ ກໍໃຫ້ສືບຕໍ່ປະຕິບັດຈົນສຳເລັດ.

**ມາດຕາ 66 (ປັບປຸງ) ການປະຕິບັດໂທດຮິບຊັບ ແລະ ໂທດຮິບວັດຖຸສິ່ງຂອງ**

ການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບໂທດຮິບຊັບ ແລະ ໂທດຮິບວັດຖຸສິ່ງຂອງ ໃຫ້ດຳເນີນຕາມທີ່ໄດ້ກຳນົດໄວ້ໃນຄຳຕັດສິນຂອງສານນັ້ນທຸກປະການ ເຖິງວ່າຜູ້ຖືກປະຕິບັດຄຳຕັດສິນຂອງສານຍັງປະຕິບັດໂທດຢູ່, ໄດ້ຮັບການອະໄພຍະໂທດ ຫຼື ພົ້ນໂທດແລ້ວກໍຕາມ.

ຊັບ ຫຼື ວັດຖຸສິ່ງຂອງ ທີ່ສານຕັດສິນຮິບເປັນຂອງລັດນັ້ນ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງສົ່ງບັນຊີ ຊັບ ຫຼື ວັດຖຸສິ່ງຂອງ ແລະ ຂໍ້ມູນທັງໝົດກ່ຽວກັບຊັບ ຫຼື ວັດຖຸສິ່ງຂອງນັ້ນ ໃຫ້ຂະແໜງການການເງິນ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຕັດສິນຂອງສານ ເປັນຕົ້ນໄປ ເພື່ອຂຶ້ນບັນຊີ

ແລະ ຈົດທະບຽນເປັນຊັບສິນຂອງລັດ. ສຳລັບ ທີ່ດິນທີ່ສານຕັດສິນຮິບເປັນຂອງລັດນັ້ນ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂຶ້ນບັນຊີ ແລະ ຂຶ້ນທະບຽນອອກໃບຕາດິນ ຫຼື ຈົດທະບຽນປ່ຽນແປງສິດນຳໃຊ້ທີ່ດິນນັ້ນ ມາເປັນທີ່ດິນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ.

ຊັບ, ວັດຖຸສິ່ງຂອງ ທີ່ສານຕັດສິນໃຫ້ຮິບແລ້ວທຳລາຍຖິ້ມ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ກວດກາຈຳນວນ, ປະເພດ, ຄຸນນະພາບ ແລະ ຂຶ້ນບັນຊີ ໃຫ້ຖືກຕ້ອງ ແລ້ວມອບໃຫ້ຂະແໜງການທີ່ກ່ຽວຂ້ອງ ເປັນຜູ້ທຳລາຍ.

## ມາດຕາ 67 (ປັບປຸງ) ການປະຕິບັດໂທດດັດສ້າງ ໂດຍບໍ່ຕັດອິດສະລະພາບ

ໃນການປະຕິບັດໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງຄຳຕັດສິນຂອງສານດັ່ງກ່າວ ໄປຍັງອົງການບ່ອນຜູ້ຖືກປະຕິບັດຄຳຕັດສິນຂອງສານສັງກັດຢູ່ ເພື່ອຫັກເອົາເງິນຄ່າແຮງງານ ແລ້ວມອບເຂົ້າງົບປະມານຂອງລັດ.

## ມາດຕາ 68 (ໃໝ່) ການສົ່ງຊັບ ຫຼື ວັດຖຸສິ່ງຂອງຄືນ

ໃນກໍລະນີ ສານໄດ້ຕັດສິນໃຫ້ສົ່ງ ຊັບ ຫຼື ວັດຖຸສິ່ງຂອງຄືນ ແກ່ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງແລ້ວ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຄອບຄອງຊັບ ຫຼື ວັດຖຸສິ່ງຂອງນັ້ນ, ຕ້ອງມອບໃຫ້ອົງການປະຕິບັດຄຳຕັດສິນຂອງສານ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບແຈ້ງການ ເປັນຕົ້ນໄປ. ຖ້າບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຄອບຄອງຊັບ ຫຼື ວັດຖຸສິ່ງຂອງນັ້ນ ຫາກບໍ່ຍອມສົ່ງຕາມກຳນົດເວລາ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ນຳໃຊ້ມາດຕະການຕາມແຕ່ລະກໍລະນີ.

ພາຍຫຼັງໄດ້ຮັບ ຊັບ ຫຼື ວັດຖຸສິ່ງຂອງແລ້ວ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງມອບໃຫ້ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງ ຕາມຄຳຕັດສິນຂອງສານ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຊັບ ຫຼື ວັດຖຸສິ່ງຂອງ ເປັນຕົ້ນໄປ.

ໃນກໍລະນີ ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງຊັບ ຕາມຄຳຕັດສິນຂອງສານ ຫາກຍັງມີພັນທະປະຕິບັດຕາມຄຳຕັດສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງເອົາມາໄລ່ລຽງ, ຕີລາຄາ ຫຼື ຂາຍຕາມແຕ່ລະກໍລະນີ ເພື່ອປະຕິບັດພັນທະດັ່ງກ່າວ.

ຖ້າວ່າ ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງ ບໍ່ມາຮັບເອົາຊັບ ຫຼື ວັດຖຸສິ່ງຂອງດັ່ງກ່າວ ພາຍໃນເວລາເກົ້າສິບວັນ ນັບແຕ່ວັນໄດ້ຮັບການແຈ້ງ ເປັນຕົ້ນໄປ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງໃຫ້ຂາຍຊັບ ຫຼື ວັດຖຸສິ່ງຂອງດັ່ງກ່າວ ແລ້ວນຳເງິນທີ່ຂາຍໄດ້ໄປຝາກໄວ້ຢູ່ທະນາຄານທຸລະກິດ ແລ້ວແຈ້ງໃຫ້ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງຊາບ. ໃນກໍລະນີເປັນເງິນ ຫາກເຈົ້າຂອງ ຫຼື ຜູ້ມີສິດຄອບຄອງບໍ່ມາຮັບເອົາ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບການແຈ້ງ ເປັນຕົ້ນໄປ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ນຳເງິນດັ່ງກ່າວໄປຝາກໄວ້ຢູ່ທະນາຄານທຸລະກິດ ແລ້ວແຈ້ງໃຫ້ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງຊາບ.

ຖ້າເຈົ້າຂອງ ຫຼື ຜູ້ມີສິດຄອບຄອງ ຫາກບໍ່ມາເອົາເງິນ ໂດຍບໍ່ມີເຫດຜົນ ພາຍໃນເວລາ ຫ້າປີ ນັບແຕ່ວັນໄດ້ຮັບການແຈ້ງ ເປັນຕົ້ນໄປ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ມອບເງິນຈຳນວນດັ່ງກ່າວ ພ້ອມດ້ວຍດອກເບ້ຍເຂົ້າງົບປະມານຂອງລັດ.

ໃນກໍລະນີ ຊັບ ຫຼື ວັດຖຸສິ່ງຂອງ ທີ່ໃຫ້ສົ່ງຄືນນັ້ນ ຫາກບໍ່ສາມາດນຳໃຊ້ໄດ້ ແລະ ບໍ່ມີມູນຄ່າ ໂດຍມີການຢັ້ງຢືນຈາກຄະນະກຳມະການທີ່ກ່ຽວຂ້ອງ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງທຳລາຍ.

**ມາດຕາ 69 (ປັບປຸງ) ການປະຕິບັດການໃຊ້ແທນຄ່າເສຍຫາຍທາງແພ່ງ**

ການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຫາ ມາດຕາ 63 ຂອງກົດໝາຍສະບັບນີ້.

ສຳລັບ ຜູ້ຍັງປະຕິບັດໂທດຢູ່, ຜູ້ໄດ້ຮັບການອະໄພຍະໂທດ ຫຼື ພົ້ນໂທດແລ້ວ ກໍຕ້ອງປະຕິບັດຄຳຕັດສິນຂອງສານ ກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ.

**ມາດຕາ 70 ບຸລິມະສິດໃນການໃຊ້ແທນຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ ຫຼື ໂທດຣິບວັດຖຸສິ່ງຂອງ**

ໃນການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ ຫຼື ໂທດຣິບວັດຖຸສິ່ງຂອງນັ້ນ ຖ້າຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກບໍ່ສາມາດໃຊ້ແທນຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ ຫຼື ໂທດຣິບວັດຖຸສິ່ງຂອງ ພ້ອມກັນໄດ້ນັ້ນ ກໍໃຫ້ປະຕິບັດການໃຊ້ແທນຄ່າເສຍຫາຍທາງແພ່ງກ່ອນ ແລ້ວຈຶ່ງປະຕິບັດໂທດປັບໃໝ, ໂທດຣິບຊັບ ຫຼື ໂທດຣິບວັດຖຸສິ່ງຂອງຕາມຫຼັງ.

## ພາກທີ V

## ການໂຈະ, ການປ່ຽນແປງ ແລະ ລຶບລ້າງ ການປະຕິບັດຄຳຕັດສິນຂອງສານ

**ມາດຕາ 71 (ປັບປຸງ) ການໂຈະການປະຕິບັດຄຳຕັດສິນຂອງສານ**

ການປະຕິບັດຄຳຕັດສິນຂອງສານ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ອີງການໄອຍະການປະຊາຊົນສູງສຸດ ສະເໜີໂຈະຢ່າງເປັນລາຍລັກອັກສອນ ໃນກໍລະນີມີການຮື້ຟື້ນຄະດີ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ;

2. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເປັນຄົນບ້າເສຍຈິດ ຫຼື ຕົກຢູ່ໃນສະພາບຈຳເປັນ ເຊັ່ນ ເຈັບປ່ວຍໜັກ ໂດຍມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ;

3. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ອອກຈາກສະຖານທີ່ຢູ່ອາໄສ ໂດຍບໍ່ຮູ້ບ່ອນຢູ່ທີ່ແນ່ນອນ ຊຶ່ງມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ;

4. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເສຍຊີວິດ ແຕ່ຜູ້ກ່ຽວຍັງມີຊັບຢູ່;

5. ຄຳຕັດສິນຂອງສານ ທີ່ບໍ່ກົງກັບຕົວຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານໄດ້ລາຍງານຫາຂັ້ນເທິງຂອງຕົນ;

6. ຄຳຕັດສິນຂອງສານ ບໍ່ຈະແຈ້ງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານໄດ້ສະເໜີໃຫ້ສານປະຊາຊົນ ອະທິບາຍ;

7. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ມີເງື່ອນໄຂປະຕິບັດ, ບໍ່ມີຄວາມສາມາດຈ່າຍຄ່າທຳນຽມສານ, ຄ່າປັບໃໝ ຫຼື ເງິນຣິບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 43 ແລະ ມາດຕາ 74 ຂອງກົດໝາຍສະບັບນີ້;

8. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ກຳລັງຖືກດຳເນີນຄະດີລົ້ມລະລາຍ;

9. ເຈົ້າໜີ້ເຫັນດີ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໂຈະການປະຕິບັດຄຳຕັດສິນຂອງສານ.

ເມື່ອສາເຫດທີ່ພາໃຫ້ໂຈະການປະຕິບັດຄຳຕັດສິນຂອງສານ ຫາກໝົດໄປແລ້ວກໍໃຫ້ສືບຕໍ່ປະຕິບັດ.

**ມາດຕາ 72 (ປັບປຸງ) ການປ່ຽນແປງ ແລະ ລຶບລ້າງການປະຕິບັດຄຳຕັດສິນຂອງສານ**

ການປ່ຽນແປງ ແລະ ລຶບລ້າງ ການປະຕິບັດຄຳຕັດສິນຂອງສານ ມີ ສາເຫດ ດັ່ງນີ້:

1.ປະຕິບັດບໍ່ຖືກຕ້ອງຕາມຄຳຕັດສິນຂອງສານ;

2.ປະຕິບັດບໍ່ຖືກຕ້ອງຕາມວິທີການ, ຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີ ການປະຕິບັດຄຳຕັດສິນຂອງສານ ຫາກຖືກປ່ຽນແປງ ແລະ ລຶບລ້າງແລ້ວ ສິ່ງທີ່ໄດ້ປະຕິບັດຕໍ່ກັນນັ້ນ ຕ້ອງໄດ້ສົ່ງຄືນ, ຟື້ນຟູ, ໃຊ້ແທນ ຫຼື ແກ້ໄຂຄືນ ໃຫ້ຖືກຕ້ອງຕາມສະພາບຄວາມເປັນຈິງ ແລ້ວດຳເນີນການປະຕິບັດຄຳຕັດສິນຂອງສານຄືນໃໝ່ ຕາມແຕ່ລະກໍລະນີ.

**ມາດຕາ 73 (ປັບປຸງ) ວິທີການ ໂຈະ, ການປ່ຽນແປງ ແລະ ລຶບລ້າງການປະຕິບັດຄຳຕັດສິນຂອງສານ**

ພາຍຫຼັງພະນັກງານປະຕິບັດຄຳຕັດສິນຂອງສານ ເຫັນວ່າມີສາເຫດທີ່ພາໃຫ້ມີການໂຈະການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 71 ຂໍ້ 2 ຫາ ຂໍ້ 7 ແລະ ຂໍ້ 9 ຂອງກົດໝາຍສະບັບນີ້ ໃຫ້ລາຍງານຕໍ່ຫົວໜ້າ ກົມ, ກອງ ຫຼື ຫ້ອງປະຕິບັດຄຳຕັດສິນຂອງສານ ທີ່ກ່ຽວຂ້ອງ ເພື່ອພິຈາລະນາອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານ. ໃນກໍລະນີການໂຈະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 71 ຂໍ້ 1 ແລະ ຂໍ້ 8 ຂອງກົດໝາຍສະບັບນີ້ ພາຍຫຼັງໄດ້ຮັບຄຳສະເໜີ, ຄຳຮ້ອງແລ້ວ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ພິຈາລະນາອອກຄຳສັ່ງໂຈະ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

ເມື່ອກະຊວງຍຸຕິທຳ, ອົງການປະຕິບັດຄຳຕັດສິນຂອງສານ ໄດ້ຮັບຄຳຮ້ອງ, ຄຳສະເໜີ ໃຫ້ມີການປ່ຽນແປງ ແລະ ລຶບລ້າງ ການປະຕິບັດຄຳຕັດສິນຂອງສານແລ້ວ ຕ້ອງໄດ້ພິຈາລະນາ ແລະ ຄົ້ນຄວ້າ ພາຍໃນເວລາ ສາມສິບວັນ ຖ້າເຫັນວ່າມີເຫດຜົນ ຫຼື ມີສາເຫດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂອງກົດໝາຍສະບັບນີ້ ກໍຕ້ອງອອກຄຳສັ່ງປ່ຽນແປງ ແລະ ລຶບລ້າງ ການປະຕິບັດຄຳຕັດສິນຂອງສານ.

ພາຍຫຼັງອອກ ຄຳສັ່ງໂຈະ, ປ່ຽນແປງ ແລະ ລຶບລ້າງແລ້ວ ຕ້ອງແຈ້ງໃຫ້ອົງການໄອຍະການປະຊາຊົນ ແລະ ຄູ່ຄວາມ, ສຳລັບ ການປ່ຽນແປງ ແລະ ລຶບລ້າງນັ້ນ ຍັງຕ້ອງແຈ້ງໃຫ້ອົງການປະຕິບັດຄຳຕັດສິນຂອງສານຂັ້ນລຸ່ມຂອງຕົນ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນອອກຄຳສັ່ງ ເປັນຕົ້ນໄປ.

ໃນກໍລະນີ ການສະເໜີ ຫຼື ການຮ້ອງຂໍ ໂຈະ, ປ່ຽນແປງ ແລະ ລຶບລ້າງ ການປະຕິບັດຄຳຕັດສິນຂອງສານນັ້ນ ຫາກບໍ່ມີເຫດຜົນ ກະຊວງຍຸຕິທຳ, ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງໃຫ້ຜູ້ສະເໜີ ຫຼື ຜູ້ຮ້ອງຂໍ ພ້ອມດ້ວຍເຫດຜົນ ແລະ ໃຫ້ສືບຕໍ່ປະຕິບັດຄຳຕັດສິນດັ່ງກ່າວ.

ອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຫຼື ບຸກຄົນອື່ນ ບໍ່ມີສິດສັ່ງໂຈະ, ປ່ຽນແປງ ແລະ ລຶບລ້າງ ການປະຕິບັດຄຳຕັດສິນຂອງສານ.

# ພາກທີ VI
# ການຍົກເລີກການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ

**ມາດຕາ 74 (ໃໝ່) ການຍົກເລີກ**

ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ບໍ່ມີຄວາມສາມາດຈ່າຍຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ຕາມຄຳຕັດສິນຂອງສານ ຫຼື ໄດ້ປະຕິບັດສ່ວນໃດສ່ວນໜຶ່ງແລ້ວ ແຕ່ບໍ່ສາມາດສືບຕໍ່ປະຕິບັດ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ສະເໜີອົງການໄອຍະການປະຊາຊົນຂັ້ນຂອງຕົນ ຕາມເງື່ອນໄຂ ເພື່ອຖະແຫຼງໃຫ້ສານປະຊາຊົນພິຈາລະນາຕັດສິນຍົກເລີກ.

ເງື່ອນໄຂການຍົກເລີກ ມີ ດັ່ງນີ້:

1. ຫ້າປີ ນັບຕັ້ງແຕ່ວັນໄດ້ອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຫຼື ວັນຈ່າຍຄັ້ງສຸດທ້າຍ ເປັນຕົ້ນໄປ ສຳລັບ ຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ທີ່ມີມູນຄ່າບໍ່ເກີນ 5.000.000 ກີບ;

2. ສິບປີ ນັບຕັ້ງແຕ່ວັນໄດ້ອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຫຼື ວັນຈ່າຍຄັ້ງສຸດທ້າຍ ເປັນຕົ້ນໄປ ສຳລັບ ຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ທີ່ມີມູນຄ່າຫຼາຍກວ່າ 5.000.000 ກີບ ຫາ 100.000.000 ກີບ;

3. ສິບຫ້າປີ ນັບຕັ້ງແຕ່ວັນໄດ້ອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຫຼື ວັນຈ່າຍຄັ້ງສຸດທ້າຍ ເປັນຕົ້ນໄປ ສຳລັບ ຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ທີ່ມີມູນຄ່າຫຼາຍກວ່າ 100.000.000 ກີບ ຂຶ້ນໄປ.

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕ້ອງໄດ້ປະຕິບັດຕາມຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ຫຼາຍຄຳຕັດສິນທີ່ຕ່າງກັນນັ້ນ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຈະຖືກພິຈາລະນາຍົກເລີກການປະຕິບັດຄຳຕັດສິນຂອງສານ ໃນແຕ່ລະຄະດີ.

**ມາດຕາ 75 (ໃໝ່) ການສະເໜີຍົກເລີກ**

ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເງື່ອນໄຂຍົກເລີກການປະຕິບັດພັນທະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 74 ຂອງກົດໝາຍສະບັບນີ້ ອົງການປະຕິບັດຄຳຕັດສິນຂອງສານ ບົນພື້ນຖານຄວາມເປັນເອກະພາບກັບຂະແໜງການການເງິນ ຕ້ອງປະກອບເອກະສານສະເໜີຍົກເລີກ ຕໍ່ອົງການໄອຍະການປະຊາຊົນຂັ້ນຂອງຕົນ ພາຍໃນເວລາ ສາມສິບວັນ ນັບແຕ່ວັນຄົບເງື່ອນໄຂ ເປັນຕົ້ນໄປ.

ເອກະສານປະກອບ ສະເໜີຍົກເລີກການປະຕິບັດຄຳຕັດສິນຂອງສານ ມີ ດັ່ງນີ້:

1. ໜັງສືສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ ທີ່ຮັບຜິດຊອບປະຕິບັດຄຳຕັດສິນຂອງສານ;

2. ຄຳຕັດສິນຂອງສານ, ຄຳສັ່ງຕ່າງໆ ຂອງອົງການປະຕິບັດຄຳຕັດສິນຂອງສານ;

3. ບົດບັນທຶກການປະຕິບັດຄຳຕັດສິນຂອງສານ, ເອກະສານອື່ນ ທີ່ອ້າງອີງເຖິງເງື່ອນໄຂບໍ່ສາມາດປະຕິບັດຄຳຕັດສິນຂອງສານ ຊຶ່ງມີໄລຍະເວລາບໍ່ເກີນ ເກົ້າສິບວັນ.

**ມາດຕາ 76 (ໃໝ່) ຄຳຖະແຫຼງຍົກເລີກ**

ພາຍຫຼັງໄດ້ຮັບເອກະສານສະເໜີຍົກເລີກແລ້ວ ອົງການໄອຍະການປະຊາຊົນ ຕ້ອງຄົ້ນຄວ້າ ແລະ ອອກຄຳຖະແຫຼງ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບໜັງສືສະເໜີ ເປັນຕົ້ນໄປ, ແລ້ວສົ່ງສຳນວນເອກະສານໃຫ້ສານປະຊາຊົນ ເພື່ອພິຈາລະນາຕັດສິນ.

ໃນກໍລະນີ ອົງການໄອຍະການປະຊາຊົນ ບໍ່ເຫັນດີຕໍ່ການສະເໜີຍົກເລີກການປະຕິບັດຄຳຕັດສິນຂອງສານ ກໍໃຫ້ແຈ້ງເປັນລາຍລັກອັກສອນພ້ອມດ້ວຍເຫດຜົນ ຕໍ່ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ພາຍໃນກຳນົດເວລາທີ່ກ່າວມາຂ້າງເທິງນີ້.

ຖ້າອົງການປະຕິບັດຄຳຕັດສິນຂອງສານ ຫາກເຫັນວ່າການປະຕິເສດອອກຄຳຖະແຫຼງ ຂອງອົງການໄອຍະການປະຊາຊົນບໍ່ມີເຫດຜົນ ກໍສາມາດສະເໜີຕໍ່ອົງການໄອຍະການປະຊາຊົນຂັ້ນເທິງຖັດໄປ.

**ມາດຕາ 77 (ໃໝ່) ການຕັດສິນຍົກເລີກ**

ພາຍຫຼັງໄດ້ຮັບ ຄຳຖະແຫຼງ ແລະ ສຳນວນເອກະສານ ການຍົກເລີກການປະຕິບັດຄຳຕັດສິນຂອງສານແລ້ວ ສານປະຊາຊົນ ຕ້ອງພິຈາລະນາຕັດສິນ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນເປັນຕົ້ນໄປ.

ຜູ້ເຂົ້າຮ່ວມ ໃນການດຳເນີນຄະດີ ມີ ດັ່ງນີ້:

1. ຜູ້ຕາງໜ້າຂອງອົງການປະຕິບັດຄຳຕັດສິນຂອງສານ;
2. ຜູ້ຕາງໜ້າຂອງອົງການໄອຍະການປະຊາຊົນ;
3. ຜູ້ຕາງໜ້າຂອງຂະແໜງການການເງິນ.

ສານປະຊາຊົນ ຕ້ອງສົ່ງຄຳຕັດສິນ ກ່ຽວກັບການຍົກເລີກການປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ, ອົງການໄອຍະການປະຊາຊົນ, ຂະແໜງການການເງິນ, ຜູ້ຖືກຍົກເລີກ ແລະ ການຈັດຕັ້ງບ່ອນຜູ້ກ່ຽວຖືກຄຸມຂັງ-ດັດສ້າງ ຫຼື ສັງກັດຢູ່ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນລົງຄຳຕັດສິນ ເປັນຕົ້ນໄປ.

ພາຍຫຼັງ ຄຳຕັດສິນ ກ່ຽວກັບການຍົກເລີກການປະຕິບັດຄຳຕັດສິນຂອງສານ ມີຜົນບັງຄັບປະຕິບັດແລ້ວ ແຕ່ມີຂໍ້ມູນຢັ້ງຢືນວ່າ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ຊຸກເຊື່ອງ, ເຊື່ອງອຳ, ມອບ, ໂອນ ຊັບສິນ ເພື່ອຫຼົບຫຼີກການປະຕິບັດ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ສະເໜີຂໍຮື້ຟື້ນຕໍ່ອົງການໄອຍະການປະຊາຊົນສູງສຸດ ເພື່ອພິຈາລະນາ ແລະ ດຳເນີນຄະດີຕາມກົດໝາຍ.

## ພາກທີ VII
## ອົງການປະຕິບັດຄຳຕັດສິນຂອງສານ

**ມາດຕາ 78 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງອົງການປະຕິບັດຄຳຕັດສິນຂອງສານ**

ອົງການປະຕິບັດຄຳຕັດສິນຂອງສານ ແມ່ນ ການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງຍຸຕິທຳ, ມີພາລະບົດບາດປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້.

**ມາດຕາ 79 (ປັບປຸງ) ໂຄງປະກອບການຈັດຕັ້ງ**

ອົງການປະຕິບັດຄຳຕັດສິນຂອງສານ ມີລະບົບການຈັດຕັ້ງຕາມສາຍຕັ້ງ ຊຶ່ງມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ແມ່ນ ການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງຍຸຕິທຳ ມີພາລະບົດບາດຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານຕາມສາຍຕັ້ງ, ເປັນເສນາທິການໃຫ້ແກ່ກະຊວງຍຸຕິທຳ ໃນການຄຸ້ມຄອງມະຫາພາກ ຕິດຕາມ, ກວດກາ ແລະ ຊຸກຍູ້ ການປະຕິບັດຄຳຕັດສິນຂອງສານຢ່າງລວມສູນ ເປັນເອກະພາບໃນຂອບເຂດທົ່ວປະເທດ ຕາມກົດໝາຍ ແລະ ລະບຽບການ;

2. ກອງປະຕິບັດຄຳຕັດສິນຂອງສານ ປະຈຳ ແຂວງ, ນະຄອນຫຼວງ ແມ່ນ ການຈັດຕັ້ງໜຶ່ງທີ່ຂຶ້ນກັບກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ມີຖານະທຽບເທົ່າກັບພະແນກຂັ້ນແຂວງ, ມີພາລະບົດບາດຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານຕາມສາຍຕັ້ງ, ເປັນເສນາທິການໃຫ້ແກ່ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ຕິດຕາມ, ກວດກາ ແລະ ຊຸກຍູ້ ການປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມກົດໝາຍ ແລະ ລະບຽບການ;

3. ຫ້ອງປະຕິບັດຄຳຕັດສິນຂອງສານ ປະຈຳ ເມືອງ, ເທດສະບານ, ນະຄອນ ແມ່ນ ການຈັດຕັ້ງໜຶ່ງທີ່ຂຶ້ນກັບກອງປະຕິບັດຄຳຕັດສິນຂອງສານ ມີຖານະທຽບເທົ່າກັບຫ້ອງການຂັ້ນເມືອງ, ມີພາລະບົດບາດຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານຕາມສາຍຕັ້ງ, ເປັນເສນາທິການໃຫ້ແກ່ກອງປະຕິບັດຄຳຕັດສິນຂອງສານ ປະຈຳ ແຂວງ, ນະຄອນຫຼວງ ຕິດຕາມ, ກວດກາ ແລະ ຊຸກຍູ້ ການປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມເປັນເອກະພາບໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 80 (ປັບປຸງ) ໂຄງປະກອບບຸກຄະລາກອນ**

ອົງການປະຕິບັດຄຳຕັດສິນຂອງສານ ມີ ໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ມີ:
   - ຫົວໜ້າກົມ, ຮອງຫົວໜ້າກົມ;
   - ຫົວໜ້າພະແນກ, ຮອງຫົວໜ້າພະແນກ;
   - ພະນັກງານປະຕິບັດຄຳຕັດສິນຂອງສານ;
   - ພະນັກງານວິຊາການ ແລະ ພະນັກງານບໍລິຫານ ຈຳນວນໜຶ່ງ.
2. ກອງປະຕິບັດຄຳຕັດສິນຂອງສານ ປະຈຳ ແຂວງ, ນະຄອນຫຼວງ ມີ:
   - ຫົວໜ້າ, ຮອງຫົວໜ້າກອງ;
   - ຫົວໜ້າ, ຮອງຫົວໜ້າຂະແໜງ;
   - ພະນັກງານປະຕິບັດຄຳຕັດສິນຂອງສານ;
   - ພະນັກງານວິຊາການ ແລະ ພະນັກງານບໍລິຫານ ຈຳນວນໜຶ່ງ.
3. ຫ້ອງປະຕິບັດຄຳຕັດສິນຂອງສານ ປະຈຳ ເມືອງ, ເທດສະບານ, ນະຄອນ ມີ:
   - ຫົວໜ້າ, ຮອງຫົວໜ້າຫ້ອງ;
   - ຫົວໜ້າ, ຮອງຫົວໜ້າໜ່ວຍງານ;
   - ພະນັກງານປະຕິບັດຄຳຕັດສິນຂອງສານ;
   - ພະນັກງານວິຊາການ ແລະ ພະນັກງານບໍລິຫານ ຈຳນວນໜຶ່ງ.

**ມາດຕາ 81 (ໃໝ່) ຫົວໜ້າ, ຮອງຫົວໜ້າ ກົມ, ກອງ ແລະ ຫ້ອງປະຕິບັດຄໍາຕັດສິນຂອງສານ**

ຫົວໜ້າກົມຄຸ້ມຄອງການປະຕິບັດຄໍາຕັດສິນຂອງສານ ຖືກແຕ່ງຕັ້ງ ແລະ ປົດຕໍາແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງຍຸຕິທໍາ.

ຮອງຫົວໜ້າກົມ, ຫົວໜ້າ, ຮອງຫົວໜ້າ ກອງ ແລະ ຫ້ອງປະຕິບັດຄໍາຕັດສິນຂອງສານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍລັດຖະມົນຕີກະຊວງຍຸຕິທໍາ. ສໍາລັບຫົວໜ້າກອງປະຕິບັດຄໍາຕັດສິນຂອງສານ ຕ້ອງໄດ້ຮັບການເຫັນດີຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ຮັບຮອງຈາກສະພາປະຊາຊົນຂັ້ນແຂວງ.

ຜູ້ຈະເປັນ ຫົວໜ້າ, ຮອງຫົວໜ້າ ກອງ ແລະ ຫ້ອງປະຕິບັດຄໍາຕັດສິນຂອງສານ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຫົວໜ້າກອງປະຕິບັດຄໍາຕັດສິນຂອງສານ ປະຈໍາ ແຂວງ, ນະຄອນຫຼວງ ຕ້ອງເປັນພະນັກງານປະຕິບັດຄໍາຕັດສິນຂອງສານ ຂັ້ນສາມ ຢ່າງໜ້ອຍ ສາມປີ;

2. ຮອງຫົວໜ້າກອງປະຕິບັດຄໍາຕັດສິນຂອງສານ ປະຈໍາ ແຂວງ, ນະຄອນຫຼວງ ຕ້ອງເປັນພະນັກງານປະຕິບັດຄໍາຕັດສິນຂອງສານ ຂັ້ນສອງ ຢ່າງໜ້ອຍ ສາມປີ;

3. ຫົວໜ້າຫ້ອງປະຕິບັດຄໍາຕັດສິນຂອງສານ ປະຈໍາ ເມືອງ, ເທດສະບານ, ນະຄອນ ຕ້ອງເປັນພະນັກງານປະຕິບັດຄໍາຕັດສິນຂອງສານ ຂັ້ນສອງ ຢ່າງໜ້ອຍ ສາມປີ;

4. ຮອງຫົວໜ້າຫ້ອງປະຕິບັດຄໍາຕັດສິນຂອງສານ ປະຈໍາ ເມືອງ, ເທດສະບານ, ນະຄອນ ຕ້ອງເປັນພະນັກງານປະຕິບັດຄໍາຕັດສິນຂອງສານ ຂັ້ນສອງ ຢ່າງໜ້ອຍ ໜຶ່ງປີ.

**ມາດຕາ 82 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫົວໜ້າ, ຮອງຫົວໜ້າ ກົມ, ກອງ ແລະ ຫ້ອງປະຕິບັດຄໍາຕັດສິນຂອງສານ**

ຫົວໜ້າ ກົມ, ກອງ ແລະ ຫ້ອງປະຕິບັດຄໍາຕັດສິນຂອງສານ ມີ ສິດ ແລະ ໜ້າທີ່ ໃນການຊີ້ນໍາ, ນໍາພາ ແລະ ກວດກາການເຄື່ອນໄຫວວຽກງານຂອງອົງການຕົນ ພ້ອມກັນນັ້ນ ກໍມີໜ້າທີ່ຮັບຜິດຊອບຕໍ່ກະຊວງຍຸຕິທໍາ, ອົງການປົກຄອງຂັ້ນແຂວງ ຫຼື ອົງການປົກຄອງຂັ້ນເມືອງ ກ່ຽວກັບການປະຕິບັດຄໍາຕັດສິນຂອງສານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 103, 104 ແລະ ມາດຕາ 105 ຂອງກົດໝາຍສະບັບນີ້.

ຮອງຫົວໜ້າ ກົມ, ກອງ ແລະ ຫ້ອງປະຕິບັດຄໍາຕັດສິນຂອງສານ ເປັນຜູ້ຊ່ວຍວຽກຫົວໜ້າ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າ. ໃນກໍລະນີຫົວໜ້າຕິດຂັດ ຍ້ອນເຫດຜົນໃດໜຶ່ງ ຮອງຫົວໜ້າ ຜູ້ໄດ້ຮັບມອບໝາຍນັ້ນ ເປັນຜູ້ຮັກສາການແທນ.

**ມາດຕາ 83 (ໃໝ່) ພະນັກງານປະຕິບັດຄໍາຕັດສິນຂອງສານ**

ພະນັກງານປະຕິບັດຄໍາຕັດສິນຂອງສານ ແມ່ນ ຜູ້ປະຕິບັດຄໍາຕັດສິນຂອງສານ ທີ່ມີມາດຕະຖານ ແລະ ເງື່ອນໄຂ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 84 ຂອງກົດໝາຍສະບັບນີ້ ແລະ ຖືກແຕ່ງຕັ້ງ ໂດຍລັດຖະມົນຕີກະຊວງຍຸຕິທໍາ.

ພະນັກງານປະຕິບັດຄໍາຕັດສິນຂອງສານ ຈັດແບ່ງຕາມຂັ້ນ ດັ່ງນີ້:

1. ພະນັກງານປະຕິບັດຄໍາຕັດສິນຂອງສານ ຂັ້ນໜຶ່ງ;

2. ພະນັກງານປະຕິບັດຄໍາຕັດສິນຂອງສານ ຂັ້ນສອງ;

3. ພະນັກງານປະຕິບັດຄໍາຕັດສິນຂອງສານ ຂັ້ນສາມ.

**ມາດຕາ 84 (ປັບປຸງ) ມາດຕະຖານ ແລະ ເງື່ອນໄຂ ຂອງພະນັກງານປະຕິບັດຄຳຕັດສິນຂອງສານ**

ພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນໜຶ່ງ ມີ ມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນພົນລະເມືອງລາວ ທີ່ມີອາຍຸແຕ່ ຊາວຫ້າປີ ຂຶ້ນໄປ;

2. ມີທັດສະນະຫຼັກໝັ້ນຊົນຊັ້ນກຳມະກອນ ແລະ ມີຄວາມໜັກແໜ້ນທາງດ້ານການເມືອງ;

3. ມີຄຸນສົມບັດ, ຈັນຍາບັນ, ຈັນຍາທຳ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ມີຄວາມສັດຊື່ບໍລິສຸດຕໍ່ປະເທດຊາດ, ຕໍ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ຂອງພົນລະເມືອງ, ມີມະນຸດສຳພັນດີ;

4. ມີລະດັບການສຶກສາກົດໝາຍ ຊັ້ນສູງຂຶ້ນໄປ ແລະ ໄດ້ຜ່ານການຝຶກອົບຮົມວຽກງານປະຕິບັດຄຳຕັດສິນຂອງສານ ຫຼື ຮຽນຈົບຫຼັກສູດກໍ່ສ້າງວິຊາຊີບປະຕິບັດຄຳຕັດສິນຂອງສານ;

5. ມີປະສົບການເຮັດວຽກກ່ຽວກັບກົດໝາຍ ຢ່າງໜ້ອຍ ສາມປີ;

6. ໄດ້ຜ່ານການສອບເສັງ ເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນໜຶ່ງ;

7. ມີສຸຂະພາບດີ.

ພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສອງ ມີ ມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນໜຶ່ງ ຢ່າງໜ້ອຍ ຫ້າປີ;

2. ໄດ້ຜ່ານການສອບເສັງ ເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສອງ.

ພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສາມ ມີ ມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສອງ ຢ່າງໜ້ອຍ ຫ້າປີ;

2. ໄດ້ຜ່ານການສອບເສັງເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສາມ.

ໃນກໍລະນີ ພະນັກງານທີ່ມາຈາກຂະແໜງການອື່ນ ແລະ ມີປະສົບການເຮັດວຽກກ່ຽວກັບກົດໝາຍ ຢ່າງໜ້ອຍ ເຈັດປີ ທີ່ມີເງື່ອນໄຂຄົບຖ້ວນຕາມຂໍ້ 1, 2, 3, 4 ແລະ 7 ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ສາມາດສອບເສັງເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນໜຶ່ງໄດ້.

**ມາດຕາ 85 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະນັກງານປະຕິບັດຄຳຕັດສິນຂອງສານ**

ພະນັກງານປະຕິບັດຄຳຕັດສິນຂອງສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ເພື່ອຂຶ້ນແຜນ ແລະ ກະກຽມເງື່ອນໄຂຕ່າງໆໃນການປະຕິບັດ;

2. ສະເໜີ ຫົວໜ້າ ກົມ, ກອງ ຫຼື ຫ້ອງປະຕິບັດຄຳຕັດສິນຂອງສານຂອງຕົນ ເພື່ອນຳສະເໜີຕໍ່ສານປະຊາຊົນ ທີ່ໄດ້ລົງຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍ ຫຼື ມີຄຳເຫັນ ຢ່າງເປັນລາຍລັກອັກສອນ ກ່ຽວກັບບັນຫາໃດໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ ຫຼື ບໍ່ຖືກກັບຕົວຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້;

3. ແຈ້ງເນື້ອໃນຄຳຕັດສິນຂອງສານ ໃຫ້ຄູ່ຄວາມຊາບ ພ້ອມທັງແນະນຳ, ສຶກສາອົບຮົມ ແລະ ຊຸກຍູ້ໃຫ້ປະຕິບັດ;

4. ເກັບກຳຂໍ້ມູນ ກ່ຽວກັບຊັບສິນ ແລະ ເງື່ອນໄຂຕ່າງໆ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ເພື່ອປະຕິບັດຄຳຕັດສິນຂອງສານ;

5. ນຳໃຊ້ ລະບົບຖານຂໍ້ມູນສະຖິຕິຄຳຕັດສິນຂອງສານ, ເຕັກໂນໂລຊີ ເຂົ້າໃນການປະຕິບັດຄຳຕັດສິນຂອງສານ;

6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດຄຳຕັດສິນຂອງສານ;

7. ສະເໜີໃຫ້ຫົວໜ້າ ກົມ, ກອງ ຫຼື ຫ້ອງປະຕິບັດຄຳຕັດສິນຂອງສານຂອງຕົນ ອອກຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງພາຕົວ, ຄຳສັ່ງໂຈະ ຫຼື ຄຳສັ່ງອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

8. ສະຫຼຸບ ແລະ ລາຍງານ ການປະຕິບັດຄຳຕັດສິນຂອງສານ ທີ່ຕົນຮັບຜິດຊອບຕໍ່ ຫົວໜ້າກົມ, ກອງ ຫຼື ຫ້ອງປະຕິບັດຄຳຕັດສິນຂອງສານຂອງຕົນ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VIII
## ຄວາມຮັບຜິດຊອບຕໍ່ການປະຕິບັດຄຳຕັດສິນຂອງສານ

**ມາດຕາ 86 (ໃໝ່) ຄວາມຮັບຜິດຊອບຂອງຄະນະປະຈຳສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ມີຄວາມຮັບຜິດຊອບຕໍ່ວຽກງານປະຕິບັດຄຳຕັດສິນຂອງສານ ທີ່ພົວພັນກັບການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 87 (ໃໝ່) ຄວາມຮັບຜິດຊອບຂອງລັດຖະບານ**

ໃນການປະຕິບັດຄຳຕັດສິນຂອງສານ ລັດຖະບານ ມີຄວາມຮັບຜິດຊອບ ດັ່ງນີ້:

1. ພິຈາລະນາອອກນະໂຍບາຍ, ນິຕິກຳ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຊີ້ນຳການປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຊີ້ນຳ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງສັງຄົມ ໃຫ້ມີສ່ວນຮ່ວມ ແລະ ຮ່ວມມື ໃນການປະຕິບັດຄຳຕັດສິນຂອງສານ;

4. ປະສານສົມທົບກັບ ຄະນະປະຈຳສະພາແຫ່ງຊາດ, ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

5. ສະຫຼຸບ ແລະ ລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະພາແຫ່ງຊາດ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

6. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 88 (ໃໝ່) ຄວາມຮັບຜິດຊອບຂອງສານປະຊາຊົນ**

ໃນການປະຕິບັດຄຳຕັດສິນຂອງສານ ສານປະຊາຊົນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຮັບປະກັນການອອກຄຳຕັດສິນ ໃຫ້ມີເນື້ອໃນຊັດເຈນ ແລະ ສາມາດປະຕິບັດໄດ້;

2. ອະທິບາຍ ຄຳຕັດສິນທີ່ບໍ່ຈະແຈ້ງ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ ຊາວວັນ ນັບແຕ່ວັນໄດ້ຮັບການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ ເປັນຕົ້ນໄປ;

3. ມີຄຳເຫັນຕໍ່ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ທີ່ບໍ່ກົງກັບຕົວຈິງເຮັດໃຫ້ບໍ່ສາມາດປະຕິບັດໄດ້ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ ຊາວວັນ ນັບແຕ່ວັນໄດ້ຮັບການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ ເປັນຕົ້ນໄປ;

4. ພິຈາລະນາຕັດສິນຍົກເລີກການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຮິບ;

5. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

6. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 89 (ໃໝ່) ຄວາມຮັບຜິດຊອບຂອງອົງການໄອຍະການປະຊາຊົນ**

ໃນການປະຕິບັດຄຳຕັດສິນຂອງສານ ອົງການໄອຍະການປະຊາຊົນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ປະສານສົມທົບກັບກະຊວງຍຸຕິທຳ ອອກນິຕິກຳທີ່ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຄົ້ນຄວ້າອອກຄຳຖະແຫຼງຍົກເລີກການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຮິບ;

3. ສະເໜີໃຫ້ກະຊວງຍຸຕິທຳ, ກົມ, ກອງ ຫຼື ຫ້ອງປະຕິບັດຄຳຕັດສິນຂອງສານ ໂຈະ, ປ່ຽນແປງ ແລະ ລຶບລ້າງການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 71 ແລະ ມາດຕາ 72 ຂອງກົດໝາຍສະບັບນີ້;

4. ສັ່ງຟ້ອງ ຜູ້ຂັດຂວາງ, ຜູ້ບໍ່ຍິນຍອມປະຕິບັດຕາມຄຳຕັດສິນຂອງສານ;

5. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

6. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 90 (ໃໝ່) ຄວາມຮັບຜິດຊອບຂອງຂະແໜງການປ້ອງກັນຄວາມສະຫງົບ**

ໃນການປະຕິບັດຄຳຕັດສິນຂອງສານ ຂະແໜງການປ້ອງກັນຄວາມສະຫງົບ ມີຄວາມຮັບຜິດຊອບ ດັ່ງນີ້:

1. ປະສານສົມທົບກັບກະຊວງຍຸຕິທຳ ເພື່ອອອກນິຕິກຳໃຕ້ກົດໝາຍ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ໃຫ້ເຈົ້າໜ້າທີ່ຕຳຫຼວດ ແລະ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ກຳລັງປະຕິບັດໂທດຢູ່ຄ້າຍຄຸມຂັງ-ດັດສ້າງ ລວມທັງ ຜົວ ຫຼື ເມຍ, ລູກ, ພໍ່, ແມ່ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ເພື່ອໃຫ້ເຂົ້າຮ່ວມ ແລະ ໃຫ້ການຮ່ວມມື ໃນການປະຕິບັດຄຳຕັດສິນຂອງສານ;

3. ເປັນເຈົ້າການປະຕິບັດ ມາດຕະການທາງດ້ານກົດໝາຍ ໃນການປະຕິບັດຄຳຕັດສິນຂອງສານ;

4. ປະສານສົມທົບກັບອົງການປະຕິບັດຄຳຕັດສິນຂອງສານ ໃນການປະຕິບັດຄຳຕັດສິນຂອງສານ ກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ, ໂທດປັບໃໝ. ໃນກໍລະນີ ມີການສະເໜີອະໄພຍະໂທດ, ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ ແລະ ກໍລະນີອື່ນ ຕາມກົດໝາຍ;

5. ສະໜອງຂໍ້ມູນ ກ່ຽວກັບການປະຕິບັດໂທດ, ການໃຊ້ແທນຄ່າເສຍຫາຍທາງແພ່ງ, ໂທດປັບໃໝ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ກຳລັງປະຕິບັດໂທດຢູ່ຄ້າຍຄຸມຂັງ-ດັດສ້າງ, ທີ່ຢູ່ອາໄສ ຂອງ

ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ໄດ້ຮັບການປ່ອຍຕົວແລ້ວ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

6. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

7. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 91 (ໃໝ່) ຄວາມຮັບຜິດຊອບຂອງຂະແໜງການການເງິນ**

ໃນການປະຕິບັດຄຳຕັດສິນຂອງສານ ຂະແໜງການການເງິນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສະໜອງຂໍ້ມູນ ກ່ຽວກັບແຫຼ່ງລາຍຮັບຈາກງົບປະມານຂອງລັດ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

2. ປະຕິບັດຕາມ ຄຳສັ່ງ, ໜັງສືສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

3. ເຂົ້າຮ່ວມການພິຈາລະນາຕັດສິນຍົກເລີກການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຮິບ;

4. ຂຶ້ນບັນຊີ, ຕິດຕາມ ຫຼື ທວງຊັບສິນ ທີ່ສານຕັດສິນຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ຕາມການແຈ້ງຂອງອົງການປະຕິບັດຄຳຕັດສິນຂອງສານ;

5. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

6. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 92 (ໃໝ່) ຄວາມຮັບຜິດຊອບຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ໃນການປະຕິບັດຄຳຕັດສິນຂອງສານ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສະໜອງຂໍ້ມູນ ກ່ຽວກັບທີ່ດິນ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

2. ຂຶ້ນບັນຊີ, ຕິດຕາມ ຫຼື ທວງສິດນຳໃຊ້ທີ່ດິນທີ່ສານຕັດສິນຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ຕາມແຈ້ງການຂອງອົງການປະຕິບັດຄຳຕັດສິນຂອງສານ;

3. ອອກ, ຖອນ, ຍົກເລີກ ຫຼື ລົບລ້າງ ເອກະສານຢັ້ງຢືນ, ສິດນຳໃຊ້ທີ່ດິນ, ໃບຕາດິນ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

4. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 93 (ໃໝ່) ຄວາມຮັບຜິດຊອບຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ**

ໃນການປະຕິບັດຄຳຕັດສິນຂອງສານ ຂະແໜງການໂຍທາທິການ ແລະ ຂົນສົ່ງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສະໜອງຂໍ້ມູນ ກ່ຽວກັບສິ່ງປຸກສ້າງ, ສິ່ງກໍ່ສ້າງ, ຍານພາຫະນະ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

2. ດຳເນີນການຕີລາຄາສິ່ງປຸກສ້າງ, ສິ່ງກໍ່ສ້າງ, ຍານພາຫະນະ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

3. ອອກ, ຖອນ, ຍົກເລີກ ຫຼື ລົບລ້າງ ເອກະສານຢັ້ງຢືນກຳມະສິດຍານພາຫະນະ, ໃບອະນຸຍາດປຸກສ້າງ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

4. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 94 (ໃໝ່) ຄວາມຮັບຜິດຊອບຂອງທະນາຄານ ແຫ່ງ ສປປ ລາວ**

ໃນການປະຕິບັດຄຳຕັດສິນຂອງສານ ທະນາຄານ ແຫ່ງ ສປປ ລາວ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຊີ້ນຳທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ໃຫ້ສະໜອງຂໍ້ມູນ ກ່ຽວກັບບັນຊີຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

2. ຊີ້ນຳທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ໃຫ້ປະຕິບັດຕາມ ຄຳສັ່ງ, ໜັງສືສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

3. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

4. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 95 (ໃໝ່) ຄວາມຮັບຜິດຊອບຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຜິດຊອບ ຕໍ່ວຽກງານປະຕິບັດຄຳຕັດສິນຂອງສານ ທີ່ພົວພັນກັບການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 96 (ໃໝ່) ຄວາມຮັບຜິດຊອບຂອງອົງການປົກຄອງທ້ອງຖິ່ນ**

ໃນການປະຕິບັດຄຳຕັດສິນຂອງສານ ອົງການປົກຄອງຂັ້ນແຂວງ, ຂັ້ນເມືອງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ອຳນວຍຄວາມສະດວກ ແລະ ຊຸກຍູ້ການເຄື່ອນໄຫວວຽກງານປະຕິບັດຄຳຕັດສິນຂອງສານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

2. ຊີ້ນຳບັນດາພະແນກການ, ຫ້ອງການ ແລະ ການຈັດຕັ້ງໃນທ້ອງຖິ່ນຂອງຕົນ ໃຫ້ເຂົ້າຮ່ວມ ແລະ ຮ່ວມມື ໃນການປະຕິບັດຄຳຕັດສິນຂອງສານ;

3. ມີຄຳເຫັນຕໍ່ການປະຕິບັດຄຳຕັດສິນຂອງສານ ທີ່ມີຄວາມຫຍຸ້ງຍາກ, ມີຜົນສະທ້ອນຕໍ່ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ໃນທ້ອງຖິ່ນຂອງຕົນ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

4. ມີຄຳເຫັນເປັນລາຍລັກອັກສອນ ກ່ຽວກັບການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າ ກອງ ແລະ ຫ້ອງປະຕິບັດຄຳຕັດສິນຂອງສານ;

5. ແຈ້ງໃຫ້ອົງການປະຕິບັດຄຳຕັດສິນຂອງສານ ກວດກາການປະຕິບັດໜ້າທີ່ວຽກງານ ຂອງພະນັກງານປະຕິບັດຄຳຕັດສິນຂອງສານ;

6. ແຈ້ງໃຫ້ອົງການປະຕິບັດຄຳຕັດສິນຂອງສານ ລາຍງານກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

7. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

8. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ໃນການປະຕິບັດຄຳຕັດສິນຂອງສານ ອົງການປົກຄອງບ້ານ ມີຄວາມຮັບຜິດຊອບ ດັ່ງນີ້:

1. ແຈ້ງຄຳສັ່ງປະຕິບັດ, ສິ່ງໝາຍຮຽກ, ໝາຍເຊີນ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງຊາບ;

2. ສະໜອງຂໍ້ມູນ ດ້ານຕ່າງໆ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ອາໄສຢູ່ໃນຂອບເຂດບ້ານຂອງຕົນ;

3. ເຂົ້າຮ່ວມ ແລະ ອຳນວຍຄວາມສະດວກ ໃນການນຳໃຊ້ມາດຕະການປະຕິບັດຄຳຕັດສິນຂອງສານ ທີ່ກ່ຽວຂ້ອງຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ;

4. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 97 (ໃໝ່) ຄວາມຮັບຜິດຊອບຂອງຂະແໜງການ ແລະ ພາກສ່ວນອື່ນ**

ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບ ປະສານສົມທົບ ແລະ ໃຫ້ຄວາມຮ່ວມມືກັບອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຕົນ.

## ພາກທີ IX
## ຂໍ້ຫ້າມ

**ມາດຕາ 98 (ປັບປຸງ) ຂໍ້ຫ້າມ ສຳລັບພະນັກງານປະຕິບັດຄຳຕັດສິນຂອງສານ**

ຫ້າມ ພະນັກງານປະຕິບັດຄຳຕັດສິນຂອງສານ ມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງ ຖ່ວງດຶງ, ເຂົ້າຂ້າງອອກຂາ, ເລືອກປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;

2. ເມີນເສີຍ, ລະເລີຍ ແລະ ຂາດຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ວຽກງານ;

3. ໃຊ້ທ່າທີບໍ່ເໝາະສົມ ໃນການປະຕິບັດໜ້າທີ່ວຽກງານ;

4. ປະຕິບັດເກີນຂອບເຂດ, ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດແກ່ຕົວ;

5. ຮັບສິນບົນ;

6. ເຈດຕະນາ ບໍ່ປະຕິບັດຕາມເນື້ອໃນຄຳຕັດສິນຂອງສານ;

7. ເຮັດສຳນວນຄະດີ ແລະ ຊັບ ເສຍຫາຍ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 99 (ປັບປຸງ) ຂໍ້ຫ້າມ ສຳລັບຄູ່ຄວາມ**

ຫ້າມ ຄູ່ຄວາມ ມີພຶດຕິກຳ ດັ່ງນີ້:

1. ຫຼົບຫຼີກການປະຕິບັດຄຳຕັດສິນຂອງສານ;

2. ຊຸກເຊື່ອງ, ມອບ, ໂອນຊັບສິນ ເພື່ອຫຼີກລຽງການປະຕິບັດຄຳຕັດສິນຂອງສານ;

3. ແອບອ້າງບຸກຄົນທີ່ມີສິດອຳນາດ ເພື່ອຂົ່ມຂູ່, ຖ່ວງດຶງ ແກ່ຍາວເວລາ ໃນການປະຕິບັດຄຳຕັດສິນຂອງສານ;

4. ໃຫ້ສິນບົນ ແກ່ພະນັກງານປະຕິບັດຄຳຕັດສິນຂອງສານ;

5. ຂັດຂວາງ ການປະຕິບັດຄຳຕັດສິນຂອງສານ;

6. ງັດແງະ, ມ້າງເພ ແລະ ທຳລາຍຊັບສິນ ທີ່ຖືກອາຍັດ ຫຼື ຍຶດ;

7. ຂົ່ມຂູ່, ທຳຮ້າຍ, ໃສ່ຮ້າຍປ້າຍສີ ພະນັກງານປະຕິບັດຄຳຕັດສິນຂອງສານ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 100 (ປັບປຸງ) ຂໍ້ຫ້າມ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ຍຸຍົງຄູ່ຄວາມ ບໍ່ໃຫ້ປະຕິບັດຄຳຕັດສິນຂອງສານ;

2. ຂັດຂວາງ ໃນການປະຕິບັດຄຳຕັດສິນຂອງສານ;

3. ເປັນສື່ກາງ ໃນການໃຫ້ ແລະ ຮັບສິນບົນ ແກ່ພະນັກງານປະຕິບັດຄຳຕັດສິນຂອງສານ;

4. ຮັບໂອນຊັບສິນ ທີ່ຕົນຮູ້ ຫຼື ຄວນຮູ້ວ່າຊັບສິນດັ່ງກ່າວຈະນຳໃຊ້ເຂົ້າໃນການປະຕິບັດຄຳຕັດສິນຂອງສານ;

5. ນຳໃຊ້ຊັບສິນ ຫຼື ວັດຖຸສິ່ງຂອງ ທີ່ເປັນຂອງກາງຄະດີ, ສານຕັດສິນຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ເພື່ອຜົນປະໂຫຍດທີ່ບໍ່ຖືກຕ້ອງ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ X
## ການຄຸ້ມຄອງ ແລະ ກວດກາ ວຽກງານປະຕິບັດຄຳຕັດສິນຂອງສານ
### ໝວດທີ 1
### ການຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານ

**ມາດຕາ 101 (ປັບປຸງ) ອົງການຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຍຸຕິທຳ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ບັນດາກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານ ປະກອບດ້ວຍ:

1. ກະຊວງຍຸຕິທຳ;

2. ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;

3. ກອງປະຕິບັດຄຳຕັດສິນຂອງສານ ປະຈຳ ແຂວງ, ນະຄອນຫຼວງ;

4. ຫ້ອງປະຕິບັດຄຳຕັດສິນຂອງສານ ປະຈຳ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 102 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງຍຸຕິທຳ**

ໃນການຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານ ກະຊວງຍຸຕິທຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ໃຫ້ເປັນ ແຜນການ, ແຜນງານ, ໂຄງການ ແລະ ປະຕິບັດ;

3. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

4. ຄຸ້ມຄອງທາງດ້ານການຈັດຕັ້ງ, ງົບປະມານ, ລາຍຮັບ-ລາຍຈ່າຍ ຂອງອົງການປະຕິບັດຄຳຕັດສິນຂອງສານ;

5. ຊີ້ນຳ, ຄຸ້ມຄອງ ແລະ ກວດກາດ້ານວິຊາການ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ໃນຂອບເຂດທົ່ວປະເທດ;

6. ສະເໜີສ້າງຕັ້ງ ຫຼື ຍຸບເລີກ ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;

7. ສ້າງຕັ້ງ ຫຼື ຍຸບເລີກ ກອງປະຕິບັດຄຳຕັດສິນຂອງສານ ປະຈຳ ແຂວງ, ນະຄອນຫຼວງ ແລະ ຫ້ອງປະຕິບັດຄຳຕັດສິນຂອງສານ ປະຈຳ ເມືອງ, ເທດສະບານ, ນະຄອນ;

8. ແຕ່ງຕັ້ງ, ຍົກຍ້າຍ, ສັບຊ້ອນ ຫຼື ປົດຕຳແໜ່ງ ບຸກຄະລາກອນ ຂອງກອງປະຕິບັດຄຳຕັດສິນຂອງສານ ປະຈຳ ແຂວງ, ນະຄອນຫຼວງ ແລະ ຫ້ອງປະຕິບັດຄຳຕັດສິນຂອງສານ ປະຈຳ ເມືອງ, ເທດສະບານ, ນະຄອນ;

9. ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;

10. ສະເໜີອົງການໄອຍະການປະຊາຊົນສູງສຸດ ກວດກາຄຳຕັດສິນຂອງສານ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ຄວາມເປັນຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້;

11. ຄົ້ນຄວ້າ ວິໄຈ ສາເຫດທີ່ຄຳຕັດສິນຂອງສານ ບໍ່ສາມາດປະຕິບັດໄດ້ ແລ້ວສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າຊອກຫາວິທີແກ້ໄຂ;

12. ໂຈະ, ປ່ຽນແປງ, ລົບລ້າງ ການປະຕິບັດຄຳຕັດສິນຂອງສານ ຫຼື ນິຕິກຳອື່ນ ຂອງກົມຄຸ້ມຄອງການປະຕິບັດຄຳຕັດສິຂອງສານ ທີ່ບໍ່ຖືກຕ້ອງຕາມຄຳຕັດສິນຂອງສານ ຫຼື ຕາມກົດໝາຍ;

13. ສະເໜີໃຫ້ຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ລົບລ້າງນິຕິກຳຂອງຕົນ ທີ່ບໍ່ສອດຄ່ອງກັບກົດໝາຍ, ຄຳຕັດສິນຂອງສານ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບການປະຕິບັດຄຳຕັດສິນຂອງສານ;

14. ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ຂອງອົງການປະຕິບັດຄຳຕັດສິນຂອງສານ ທາງດ້ານການເມືອງ-ແນວຄິດ, ຄຸນສົມບັດ, ຈັນຍາທຳ ແລະ ວິຊາສະເພາະ;

15. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;

16. ພົວພັນ ຮ່ວມມືກັບຕ່າງປະເທດ ກ່ຽວກັບການຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານ;

17. ສະຫຼຸບ ແລະ ລາຍງານ ການປະຕິບັດຄຳຕັດສິນຂອງສານ ໃນຂອບເຂດທົ່ວປະເທດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 103 (ໃໝ່) ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ**

ໃນການຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານ ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ຫຼື ໂຄງການ ກ່ຽວກັບວຽກງານປະຕິບັດຄຳຕັດສິນຂອງສານ;

2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

3. ຊີ້ນຳ, ຄຸ້ມຄອງ ແລະ ກວດກາດ້ານວິຊາການ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

4. ຊີ້ນຳ, ກວດກາ ແລະ ຄຸ້ມຄອງລາຍຮັບ-ລາຍຈ່າຍ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

5. ປະຕິບັດຄຳຕັດສິນຂອງສານ ທີ່ມີຄວາມຫຍຸ້ງຍາກ, ພົວພັນກັບຫຼາຍແຂວງ, ຕ່າງປະເທດ ທີ່ທ້ອງຖິ່ນບໍ່ສາມາດປະຕິບັດໄດ້ ຕາມການສະເໜີຢ່າງມີເຫດຜົນຂອງກອງປະຕິບັດຄຳຕັດສິນຂອງສານ ປະຈຳແຂວງ, ນະຄອນຫຼວງ ບົນພື້ນຖານການເຫັນດີຂອງກະຊວງຍຸຕິທຳ;

6. ມອບຄະດີໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ປະຕິບັດ ຫຼື ຖອນຄະດີຄືນຈາກພະນັກງານປະຕິບັດຄຳຕັດສິນຂອງສານ;

7. ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ໝາຍຮຽກ, ຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງພາຕົວ, ຄຳສັ່ງປິດການປະຕິບັດຄຳຕັດສິນຂອງສານ ແລະ ຄຳສັ່ງອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

8. ທວງເອົາຂອງກາງຄະດີ ທີ່ຍັງບໍ່ທັນໄດ້ຮັບຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳມາປະຕິບັດ;

9. ສະເໜີໃຫ້ສານປະຊາຊົນ ທີ່ໄດ້ອອກຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍ ຫຼື ມີຄຳເຫັນ ຢ່າງເປັນລາຍລັກອັກສອນ ກ່ຽວກັບບັນຫາໃດໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ;

10. ສະເໜີຕໍ່ອົງການໄອຍະການປະຊາຊົນ ຫຼື ເຈົ້າໜ້າທີ່ຕຳຫຼວດ ນຳໃຊ້ມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາບໍ່ປະຕິບັດ ຫຼື ຫຼົບຫຼີກການປະຕິບັດຄຳຕັດສິນຂອງສານ;

11. ລາຍງານລັດຖະມົນຕີກະຊວງຍຸຕິທຳ ກ່ຽວກັບຄຳຕັດສິນຂອງສານ ທີ່ບໍ່ສອດຄ່ອງກັບຄວາມເປັນຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້;

12. ຮັບ ແລະ ແກ້ໄຂຄຳຮ້ອງ ຫຼື ຄຳສະເໜີ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

13. ສະເໜີລັດຖະມົນຕີກະຊວງຍຸຕິທຳ ກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ສັບຊ້ອນ ຫຼື ລົງວິໄນ ບຸກຄະລາກອນຂອງອົງການປະຕິບັດຄຳຕັດສິນຂອງສານ;

14. ອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 71 ຂອງກົດໝາຍສະບັບນີ້;

15. ປ່ຽນແປງ ແລະ ລົບລ້າງ ການປະຕິບັດຄຳຕັດສິນຂອງສານ ຫຼື ນິຕິກຳອື່ນ ຂອງກອງປະຕິບັດຄຳຕັດສິນຂອງສານ ປະຈຳ ແຂວງ, ນະຄອນຫຼວງ ທີ່ບໍ່ຖືກຕ້ອງຕາມຄຳຕັດສິນ ຫຼື ຕາມກົດໝາຍ;

16. ຄຸ້ມຄອງ, ນຳໃຊ້ ລະບົບຖານຂໍ້ມູນສະຖິຕິຄຳຕັດສິນຂອງສານ, ເຕັກໂນໂລຊີ ເຂົ້າໃນການປະຕິບັດຄຳຕັດສິນຂອງສານ;

17. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

18. ລາຍງານການປະຕິບັດຄຳຕັດສິນຂອງສານ ໃຫ້ອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີ;

19. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປະຕິບັດຄຳຕັດສິນຂອງສານ ຕາມການມອບໝາຍຂອງກະຊວງຍຸຕິທຳ;

20. ສະຫຼຸບ ແລະ ລາຍງານການປະຕິບັດຄຳຕັດສິນຂອງສານ ໃຫ້ກະຊວງຍຸຕິທຳ ຢ່າງເປັນປົກກະຕິ;

21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 104 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງປະຕິບັດຄຳຕັດສິນຂອງສານ ປະຈຳ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານ ກອງປະຕິບັດຄຳຕັດສິນຂອງສານ ປະຈຳ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແລະ ນິຕິກຳອື່ນ ກ່ຽວກັບວຽກງານປະຕິບັດຄຳຕັດສິນຂອງສານ;

2. ຊີ້ນຳ, ກວດກາ ແລະ ຄຸ້ມຄອງລາຍຮັບ-ລາຍຈ່າຍ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

3. ປະຕິບັດຄຳຕັດສິນຂອງສານ ທີ່ສານປະຊາຊົນ ແຂວງ, ນະຄອນຫຼວງ ໄດ້ຕັດສິນເປັນຂັ້ນຕົ້ນ;

4. ປະຕິບັດຄຳຕັດສິນຂອງສານ ທີ່ມີຄວາມຫຍຸ້ງຍາກ, ພົວພັນກັບຫຼາຍເມືອງ ບົນພື້ນຖານການສະເໜີຢ່າງມີເຫດຜົນ ຂອງຫ້ອງປະຕິບັດຄຳຕັດສິນຂອງສານ ປະຈຳ ເມືອງ, ເທດສະບານ, ນະຄອນ;

5. ມອບຄະດີໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ປະຕິບັດ ຫຼື ຖອນຄະດີຄືນຈາກພະນັກງານປະຕິບັດຄຳຕັດສິນຂອງສານ;

6. ຊີ້ນຳທາງດ້ານວິຊາການ ແລະ ກວດກາການປະຕິບັດໜ້າທີ່ ຂອງຫ້ອງປະຕິບັດຄຳຕັດສິນຂອງສານ ປະຈຳ ເມືອງ, ເທດສະບານ, ນະຄອນ;

7. ທວງເອົາຂອງກາງຄະດີ ທີ່ຍັງບໍ່ທັນໄດ້ຮັບຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳມາປະຕິບັດ;

8. ສະເໜີໃຫ້ສານປະຊາຊົນ ທີ່ໄດ້ອອກຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍ ຫຼື ມີຄຳເຫັນ ຢ່າງເປັນລາຍລັກອັກສອນ ກ່ຽວກັບບັນຫາໃດໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ;

9. ສະເໜີຕໍ່ອົງການໄອຍະການປະຊາຊົນ ຫຼື ເຈົ້າໜ້າທີ່ຕຳຫຼວດ ນຳໃຊ້ມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາບໍ່ປະຕິບັດ ຫຼື ຫຼົບຫຼີກການປະຕິບັດຄຳຕັດສິນຂອງສານ;

10. ລາຍງານຂັ້ນເທິງຂອງຕົນ ກ່ຽວກັບຄຳຕັດສິນທີ່ບໍ່ສອດຄ່ອງກັບຄວາມເປັນຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້;

11. ອອກຂໍ້ຕົກລົງ, ແຈ້ງການ, ໝາຍຮຽກ, ຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງພາຕົວ, ຄຳສັ່ງປິດການປະຕິບັດຄຳຕັດສິນຂອງສານ ແລະ ຄຳສັ່ງອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

12. ອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 71 ຂອງກົດໝາຍສະບັບນີ້;

13. ປັບປຸງແປງ ແລະ ລົບລ້າງ ການປະຕິບັດຄຳຕັດສິນຂອງສານ ຫຼື ນິຕິກຳອື່ນ ຂອງຫ້ອງປະຕິບັດຄຳຕັດສິນຂອງສານ ປະຈຳ ເມືອງ, ເທດສະບານ, ນະຄອນ ທີ່ບໍ່ຖືກຕ້ອງຕາມຄຳຕັດສິນ ຫຼື ຕາມກົດໝາຍ;

14. ຮັບ ແລະ ແກ້ໄຂຄຳຮ້ອງ ຫຼື ຄຳສະເໜີ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

15. ຄຸ້ມຄອງ, ນຳໃຊ້ ລະບົບຖານຂໍ້ມູນສະຖິຕິຄຳຕັດສິນຂອງສານ, ເຕັກໂນໂລຊີ ເຂົ້າໃນການປະຕິບັດຄຳຕັດສິນຂອງສານ;

16. ປະສານສົມທົບກັບ ພະແນກການ ແລະ ພາກສ່ວນອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

17. ລາຍງານ ການປະຕິບັດຄຳຕັດສິນຂອງສານ ໃຫ້ອົງການໄອຍະການປະຊາຊົນຂັ້ນຂອງຕົນ ຢ່າງເປັນປົກກະຕິ ຫຼື ຕາມການສະເໜີ;

18. ສະຫຼຸບ ແລະ ລາຍງານ ການປະຕິບັດຄຳຕັດສິນຂອງສານ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 105 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງປະຕິບັດຄຳຕັດສິນຂອງສານ ປະຈຳ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານ ຫ້ອງປະຕິບັດຄຳຕັດສິນຂອງສານ ປະຈຳ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານປະຕິບັດຄຳຕັດສິນຂອງສານ;

2. ປະຕິບັດຄຳຕັດສິນຂອງສານ ທີ່ສານປະຊາຊົນເຂດ ໄດ້ຕັດສິນເປັນຂັ້ນຕົ້ນ;

3. ມອບຄະດີໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ປະຕິບັດ ຫຼື ຖອນຄະດີຄືນຈາກພະນັກງານປະຕິບັດຄຳຕັດສິນຂອງສານ;

4. ທວງເອົາຂອງກາງຄະດີ ທີ່ຍັງບໍ່ທັນໄດ້ຮັບຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳມາປະຕິບັດ;

5. ສະເໜີໃຫ້ສານປະຊາຊົນ ທີ່ໄດ້ອອກຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍ ຫຼື ມີຄຳເຫັນ ຢ່າງເປັນລາຍລັກອັກສອນ ກ່ຽວກັບບັນຫາໃດໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ;

6. ສະເໜີຕໍ່ອົງການໄອຍະການປະຊາຊົນ ຫຼື ເຈົ້າໜ້າທີ່ຕໍາຫຼວດ ນໍາໃຊ້ມາດຕະການຕໍ່ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ທີ່ມີເຈດຕະນາບໍ່ປະຕິບັດ ຫຼື ຫຼົບຫຼີກການປະຕິບັດຄໍາຕັດສິນຂອງສານ;

7. ອອກຂໍ້ຕົກລົງ, ແຈ້ງການ, ໝາຍຮຽກ, ຄໍາສັ່ງອາຍັດ, ຄໍາສັ່ງຍຶດຊັບ, ຄໍາສັ່ງຍົກຍ້າຍ, ຄໍາສັ່ງພາຕົວ, ຄໍາສັ່ງປິດການປະຕິບັດຄໍາຕັດສິນຂອງສານ ແລະ ຄໍາສັ່ງອື່ນ ກ່ຽວກັບການປະຕິບັດຄໍາຕັດສິນຂອງສານ;

8. ລາຍງານຂັ້ນເທິງຂອງຕົນ ກ່ຽວກັບຄໍາຕັດສິນທີ່ບໍ່ສອດຄ່ອງກັບຄວາມເປັນຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້;

9. ອອກຄໍາສັ່ງໂຈະການປະຕິບັດຄໍາຕັດສິນຂອງສານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 71 ຂອງກົດໝາຍສະບັບນີ້;

10. ປະສານສົມທົບກັບຫ້ອງການ ແລະ ພາກສ່ວນອື່ນກ່ຽວກັບການປະຕິບັດຄໍາຕັດສິນຂອງສານ;

11. ຄຸ້ມຄອງ, ນໍາໃຊ້ ລະບົບຖານຂໍ້ມູນ ສະຖິຕິຄໍາຕັດສິນຂອງສານ, ເຕັກໂນໂລຊີ ເຂົ້າໃນການປະຕິບັດຄໍາຕັດສິນຂອງສານ;

12. ລາຍງານ ການປະຕິບັດຄໍາຕັດສິນຂອງສານ ໃຫ້ອົງການໄອຍະການປະຊາຊົນຂັ້ນຂອງຕົນ ຢ່າງເປັນປົກກະຕິ ຫຼື ຕາມການສະເໜີ;

13. ສະຫຼຸບ ແລະ ລາຍງານ ການປະຕິບັດຄໍາຕັດສິນຂອງສານ ໃຫ້ກອງປະຕິບັດຄໍາຕັດສິນຂອງສານ ປະຈໍາ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານປະຕິບັດຄໍາຕັດສິນຂອງສານ

**ມາດຕາ 106 (ປັບປຸງ) ອົງການກວດກາວຽກງານປະຕິບັດຄໍາຕັດສິນຂອງສານ**

ອົງການກວດກາ ມີ ດັ່ງນີ້:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານປະຕິບັດຄໍາຕັດສິນຂອງສານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 101 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ ແລະ ອົງການໄອຍະການປະຊາຊົນ.

**ມາດຕາ 107 (ປັບປຸງ) ເນື້ອໃນການກວດກາ**

ເນື້ອໃນຕົ້ນຕໍຂອງການກວດກາ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການປະຕິບັດຄໍາຕັດສິນຂອງສານ;

2. ຄໍາຮ້ອງ ຫຼື ຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການປະຕິບັດຄໍາຕັດສິນຂອງສານ;

3. ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການປະຕິບັດຄໍາຕັດສິນຂອງສານ;

4. ການຄຸ້ມຄອງ ແລະ ການນໍາໃຊ້ລາຍຮັບ-ລາຍຈ່າຍ ກ່ຽວກັບການປະຕິບັດຄໍາຕັດສິນຂອງສານ;

5. ຄວາມຮັບຜິດຊອບ ແລະ ການປະພຶດ ຂອງພະນັກງານປະຕິບັດຄໍາຕັດສິນຂອງສານ.

**ມາດຕາ 108 (ໃໝ່) ຮູບການການກວດກາ**

ການກວດກາ ວຽກງານປະຕິບັດຄໍາຕັດສິນຂອງສານ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການກວດກາ ວຽກງານປະຕິບັດຄໍາຕັດສິນຂອງສານ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ພາກທີ XI
## ງົບປະມານ, ເຄື່ອງແບບ, ກາໝາຍ ແລະ ຕາປະທັບ

**ມາດຕາ 109 (ປັບປຸງ) ງົບປະມານ**

ອົງການປະຕິບັດຄໍາຕັດສິນຂອງສານ ແມ່ນ ຫົວໜ່ວຍງົບປະມານຂັ້ນສອງ ຂຶ້ນກັບກະຊວງຍຸຕິທໍາ ຊຶ່ງຕ້ອງໄດ້ຂຶ້ນແຜນ, ຄຸ້ມຄອງ ແລະ ນໍາໃຊ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

**ມາດຕາ 110 (ປັບປຸງ) ເຄື່ອງແບບ ແລະ ກາໝາຍ**

ອົງການປະຕິບັດຄໍາຕັດສິນຂອງສານ ມີ ເຄື່ອງແບບ ແລະ ກາໝາຍສະເພາະ ຊຶ່ງໄດ້ຮັບອະນຸຍາດຈາກລັດຖະບານ ຕາມການສະເໜີຂອງລັດຖະມົນຕີກະຊວງຍຸຕິທໍາ.

ພະນັກງານປະຕິບັດຄໍາຕັດສິນຂອງສານ ຕ້ອງນຸ່ງເຄື່ອງແບບ ແລະ ຕິດກາໝາຍສະເພາະ ໃນເວລາປະຕິບັດໜ້າທີ່ທາງລັດຖະການ.

**ມາດຕາ 111 (ປັບປຸງ) ຕາປະທັບ**

ອົງການປະຕິບັດຄໍາຕັດສິນຂອງສານ ມີ ຕາປະທັບ ເພື່ອນໍາໃຊ້ໃນການເຄື່ອນໄຫວວຽກງານທາງລັດຖະການ.

ຕາປະທັບຂອງອົງການປະຕິບັດຄໍາຕັດສິນຂອງສານ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ XII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 112 (ປັບປຸງ) ນະໂຍບາຍ ຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະ ປະກອບສ່ວນ ໃນການປະຕິບັດຄຳຕັດສິນຂອງສານ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 113 (ປັບປຸງ) ມາດຕະການ ຕໍ່ຜູ້ລະເມີດ**

ພະນັກງານປະຕິບັດຄຳຕັດສິນຂອງສານ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

# ພາກທີ XIII
# ບົດບັນຍັດສຸດທ້າຍ

**ມາດຕາ 114 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 115 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 04/ສພຊ, ລົງວັນທີ 25 ກໍລະກົດ 2008.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ